# ເງື່ອນໄຂທົ່ວໄປ ປະກັນໄພລົດ

# ອາລີອັນສ໌ ປະກັນໄພລາວ

ປະເພດເອກະສານ: Internal

© Allianz Insurance Laos

ການອະນຸມັດ:

ເນື້ອໃນເອກະສານດັ່ງກ່າວນີ້ໄດ້ຜ່ານການດັດແກ້ ແລະ ອະນຸມັດ ຄືດັ່ງນີ້:

| **ສະບັບ** | **ຂອບເຂດການນຳໃຊ້** | **ຮຽບຮຽງໂດຍ:** | **ອະນຸມັດໂດຍ** |
|---|---|---|---|
| ສະບັບດັດແກ້ | ເອກະສານດັ່ງກ່າວນີ້ໃຊ້ອ້າງອີງ ສຳລັບເງື່ອນໄຂປະກັນໄພລົດ ປ່ຽນແທນທຸກເອກະສານທີ່ບໍ່ສອດຄ່ອງກັບເອກະສານດັ່ງກ່າວນີ້ | ພະແນກປະກັນໄພລົດ | ກີ ອາໂປວີ (ຜູ້ອຳນວຍການ) |
| | | | |

# ປະກັນໄພລົດ
# ເງື່ອນໄຂທົ່ວໄປ

## ສາລະບານ


ພາກທີ I: ຂໍ້ກຳນົດ ກ່ຽວກັບ ການຄຸ້ມກັນ ....4
ມາດຕາ 1 ການກຳນົດການຄຸ້ມກັນ ....4
ມາດຕາ 2 ຂໍ້ຈຳກັດທາງດ້ານຂອບເຂດ ຂອງ ການຄຸ້ມກັນ ....4
ມາດຕາ 3 ນິຍາມຂອງຄຳສັບທົ່ວໄປ ....4
ມາດຕາ 4 ການຢືນຢັນ ....4
I. ຜູ້ສະເໜີເອົາການປະກັນໄພ: ....6
1. ຜູ້ໄດ້ຮັບການປະກັນໄພ ....6
2. ບຸກຄົນທີສາມ: ....6
ມາດຕາ 5 ນິຍາມຂອງຄຳສັບ ກ່ຽວກັບ ພາຫະນະ ....6
ພາກທີ II. ການຄຸ້ມກັນຂອງປະກັນໄພ ....7
ມາດຕາ 6 ການຄຸ້ມກັນໃນຂໍ້ ກຂ. ຄວາມຮັບຜິດຊອບທາງແພ່ງ ທີ່ກ່ຽວຂ້ອງກັບການຈາລະຈອນທາງບົກ ແລະ ນອກເໜືອຈາກ ການຈະລາຈອນທາງບົກ (ໃນກໍລະນີມີການຊື້ເອົາການຄຸ້ມກັນດັ່ງກ່າວນີ້) ....7
ມາດຕາ 7 ຄວາມເສຍຫາຍຕໍ່ໂຕລົດປະກັນໄພ: (ໃນກໍລະນີມີການຊື້ເອົາການຄຸ້ມກັນດັ່ງກ່າວນີ້) ....9
A. ຈຸດປະສົງຂອງການຄຸ້ມກັນ ....9
B. ບໍລິສັດປະກັນໄພ ມີສິດພິຈາລະນາດັ່ງລຸ່ມນີ້: ....9
C. ຂໍ້ຈຳກັດໃນການທົດແທນຄ່າເສຍຫາຍ: ....10
D. ການກວດກາສະພາບລົດ: ....10
ມາດຕາ 8 ຂໍ້ຍົກເວັ້ນການຄຸ້ມກັນ ....10
ມາດຕາ 9 ການປົກປ້ອງສິດ ແລະ ຮຽກຮ້ອງທົດແທນຄືນ (ໃນກໍລະນີມີການຊື້ເອົາການຄຸ້ມກັນດັ່ງກ່າວນີ້) ....13
ມາດຕາ 10 ການຄຸ້ມກັນຜູ້ຂັບຂີ່ (ໃນກໍລະນີມີການຊື້ເອົາການຄຸ້ມກັນດັ່ງກ່າວນີ້) ....14
1. ຈຸດປະສົງຂອງການຄຸ້ມກັນ ....14
2. ຂໍ້ຍົກເວັ້ນການຄຸ້ມກັນ. ....14
ມາດຕາ 11 ຄ່າປິ່ນປົວ ....14
ພາກທີ III. ພັນທະ ຂອງ ຜູ້ຊື້ປະກັນໄພ ແລະ ຜູ້ໄດ້ຮັບການປະກັນໄພ ໃນການສະໜອງຂໍ້ມູນ ກ່ຽວກັບ ຄວາມສ່ຽງ ....15
ມາດຕາ 12 ການແຈ້ງຂໍ້ມູນ ຂອງ ຜູ້ຊື້ປະກັນໄພ ພາຍຫຼັງ ແລະ ໃນລະຫວ່າງ ການເຮັດສັນຍາປະກັນໄພ ....15
ການປະຕິບັດສັນຍາ – ມາດຕະການຕໍ່ຜູ້ລະເມີດ ....15
ມາດຕາ 13 ການຈ່າຍຄ່າທຳນຽມປະກັນໄພ ....16
ມາດຕາ 14 ການແກ້ໄຂອຸປະຕິເຫດ ....16
ພາກທີ IV: ຂັ້ນຕອນການຮຽກຮ້ອງສິນທົດແທນປະກັນໄພ ....18
ມາດຕາ 15 ຄຳແນະນຳ ກ່ຽວກັບ ການປະຕິບັດພາຍຫຼັງເກີດອຸປະຕິເຫດ ແລະ ຂັ້ນຕອນການຈ່າຍສິນທົດແທນປະກັນໄພ ....18
ມາດຕາ 16 ຄຳແນະນຳເບື້ອງຕົ້ນ ກ່ຽວກັບ ການປະຕິບັດພາຍຫຼັງເກີດອຸປະຕິເຫດ ....19

**ມາດຕາ** 17 **ການຈ່າຍສິນທົດແທນປະກັນໄພ** .......... 19
**ມາດຕາ** 18 **ຂັ້ນຕອນການອະນຸມັດການຈ່າຍສິນທົດແທນປະກັນໄພ** .......... 20
**ມາດຕາ** 19 **ຂໍ້ຄວນຈື່ທີ່ສຳຄັນ** .......... 21
**ມາດຕາ** 20 **ການສໍ້ໂກງບໍລິສັດປະກັນໄພ** .......... 22
**ມາດຕາ** 21 **ຄວາມຍິນຍອມ ຂອງ ລູກຄ້າ** .......... 22
**ພາກທີ** V. **ຂໍ້ກຳນົດ ກ່ຽວກັບ ສັນຍາ** .......... 22
**ມາດຕາ** 22 **ການສ້າງ ແລະ ຜົນບັງຄັບໃຊ້ ຂອງ ສັນຍາ** .......... 22
**ມາດຕາ** 23 **ອາຍຸສັນຍາ** .......... 22
**ມາດຕາ** 24 **ການຍົກເລີກສັນຍາ** .......... 23
1. **ການຍົກເລີກໂດຍ ຜູ້ຊື້ປະກັນໄພ ຫຼື ບໍລິສັດປະກັນໄພ** .......... 23
2. **ການຍົກເລີກໂດຍ ຜູ້ສືບທອດມູນມໍລະດົກ ຫຼື ບໍລິສັດປະກັນໄພ ຂໍຍົກເລີກສັນຍາ** .......... 23
3. **ການຍົກເລີກໂດຍ ບໍລິສັດປະກັນໄພ** .......... 23
24.6 ໃນກໍລະນີ ບໍ່ຈ່າຍຄ່າທຳນຽມປະກັນໄພ. .......... 23
24.7 ໃນກໍລະນີ ມີຄວາມສ່ຽງເພີ່ມຂຶ້ນ. .......... 23
4. **ການຍົກເລີກໂດຍ ຜູ້ຊື້ປະກັນໄພ** .......... 23
5. **ການຍົກເລີກໂດຍ ເຈົ້າໜີ້ ຂອງ ຜູ້ຊື້ປະກັນໄພ** .......... 23
6. **ການຍົກເລີກຕາມສິດ** .......... 23
**ມາດຕາ** 25 **ການໂອນກຳມະສິດຕໍ່ພາຫະນະທີ່ມີປະກັນໄພ** .......... 24
1. **ການເສຍຊີວິດ ຂອງ ຜູ້ຊື້ປະກັນໄພ** .......... 24
2. **ການໂອນກຳມະສິດ ຕໍ່ ພາຫະນະທີ່ມີປະກັນໄພ** .......... 24
3. **ຂັ້ນຕອນການຍົກເລີກ** .......... 24
**ມາດຕາ** 26 **ການຄຸ້ມກັນຂໍ້ມູນ** .......... 25
**ມາດຕາ** 27 **ອາຍຸຄວາມໃນການຮ້ອງຟ້ອງ** .......... 25
**ມາດຕາ** 28 **ສິດອຳນາດຂອງສານ** .......... 25
**ການແກ້ໄຂຂໍ້ຂັດແຍ່ງ** .......... 26
**ພາກທີ** VI. **ເອກະສານຄັດຕິດ** .......... 26
**ເອກະສານຄັດຕິດ I** .......... 26
i. **ລະດັບຄວາມພິການຖາວອນທັງໝົດ** (100%) .......... 26
ii. **ລະດັບຄວາມພິການຖາວອນບາງສ່ວນ** .......... 26
**ເອກະສານຄັດຕິດ II ສ່ວນຫຼຸດຄ່າທຳນຽມ / ມາດຕະການເພີ່ມຄ່າທຳນຽມ** .......... 27
**ເອກະສານຄັດຕິດ III ຫຼັກການ ກ່ຽວກັບ ຄວາມຮັບຜິດຊອບໂດຍບໍ່ຖືຄວາມຜິດ** .......... 27
**ເອກະສານຄັດຕິດ IV ການເສື່ອມສະພາບ ຂອງ ພາຫະນະທີ່ແລ່ນດ້ວຍເຄື່ອງຈັກ** .......... 27

ສັນຍາປະກັນໄພ ແມ່ນ ສັນຍາ ລະຫວ່າງ ທ່ານ (ຕໍ່ໄປນີ້ເອີ້ນວ່າ "**ຜູ້ໄດ້ຮັບການປະກັນໄພ**")
ແລະ ບໍລິສັດ ອາລີອັນສ໌ ປະກັນໄພ ລາວ ຈຳກັດ (ຕໍ່ໄປນີ້ເອີ້ນວ່າ "**ບໍລິສັດປະກັນໄພ**" ຫຼື "**ຜູ້ປະກັນໄພ**" **ຫຼື AZL**).

ສັນຍາປະກັນໄພ, ເງື່ອນໄຂສະເພາະ, ໃບຢັ້ງຢືນປະກັນໄພ, ໜັງສືສະຫຼັກຫຼັງ ແລະ ແບບຟອມການຂໍປະກັນໄພ ແມ່ນເປັນ ເອກະສານພື້ນຖານ ຂອງ ສັນຍາສະບັບນີ້ ທີ່ອະທິບາຍລະອຽດ ກ່ຽວກັບ ສິ່ງທີ່ ບໍລິສັດປະກັນໄພ ຄຸ້ມກັນ ແລະ ບໍ່ຄຸ້ມກັນ.

ພາຍຫຼັງທີ່ ຜູ້ໄດ້ຮັບການປະກັນໄພ ໄດ້ຊໍາລະ ຄ່າທໍານຽມປະກັນໄພ ໃຫ້ແກ່ ບໍລິສັດປະກັນໄພ ແລ້ວ, ບໍລິສັດປະກັນໄພ ຈະທົດແທນຄ່າເສຍຫາຍທີ່ເກີດຂຶ້ນຕໍ່ ຜູ້ໄດ້ຮັບການປະກັນໄພ ສໍາລັບ ການເສຍຊີວິດຈາກອຸປະຕິເຫດ, ການບາດເຈັບ, ຄວາມເສຍຫາຍ ຫຼື ຄວາມສູນເສຍ ທີ່ເກີດຂຶ້ນໃນ ໄລຍະເວລາການຄຸ້ມກັນ ທີ່ໄດ້ກໍານົດໄວ້ໃນ ໃບຢັ້ງຢືນປະກັນໄພ ໂດຍປະຕິບັດຕາມ ຂໍ້ກໍານົດ, ເງື່ອນໄຂ ຫຼື ໜັງສືສະຫຼັກຫຼັງ ຂອງສັນຍາປະກັນໄພ ດັ່ງທີ່ກໍານົດໄວ້ລຸ່ມນີ້.

**ເພື່ອເປັນຫຼັກຖານ**, ຜູ້ຕາງໜ້າ ຂອງບໍລິສັດປະກັນໄພ ຈຶ່ງໄດ້ລົງລາຍເຊັນໄວ້ໃນສັນຍາປະກັນໄພ.

ສັນຍາສະບັບນີ້ ແມ່ນໄດ້ຮັບການຄຸ້ມກັນພາຍໃຕ້ ເງື່ອນໄຂທົ່ວໄປ ແລະ ສະເພາະທີ່ໄດ້ກໍານົດໄວ້ໃນ ເອກະສານຊ້ອນທ້າຍ:

## ພາກທີ I: ຂໍ້ກໍານົດ ກ່ຽວກັບ ການຄຸ້ມກັນ

**ການກໍານົດ ແລະ ຂໍ້ຈໍາກັດທາງດ້ານຂອບເຂດ ຂອງ ປະກັນໄພ**
**ນິຍາມຂອງຄໍາສັບ ທີ່ກ່ຽວຂ້ອງກັບ ຜູ້ໄດ້ຮັບການປະກັນໄພ ແລະ ພາຫະນະທີ່ມີປະກັນໄພ**

### ມາດຕາ 1 ການກໍານົດການຄຸ້ມກັນ

1.1 ສັນຍາສະບັບນີ້ ຄຸ້ມກັນຄວາມສ່ຽງຕ່າງໆ ທີ່ໄດ້ກໍານົດໄວ້ໃນ ສັນຍາສະບັບນີ້, ເຊິ່ງການປະກັນໄພຄວາມສ່ຽງດັ່ງກ່າວ ແມ່ນໄດ້ ລະບຸໄວ້ໃນ ເງື່ອນໄຂສະເພາະ,

1.2 ການປະກັນໄພ ຈະສິ້ນສຸດລົງ ຫຼື ເພີ່ມການຄຸ້ມກັນ ຄວາມສ່ຽງອື່ນໆ ໂດຍການອອກໜັງສືຄັດຕິດສະເພາະ ເພື່ອເປັນໜັງສືຊ້ອນທ້າຍ ສັນຍາສະບັບນີ້ ໂດຍກໍານົດ ເງື່ອນໄຂຕ່າງໆ ສໍາລັບ ການຄຸ້ມກັນ.

### ມາດຕາ 2 ຂໍ້ຈໍາກັດທາງດ້ານຂອບເຂດ ຂອງ ການຄຸ້ມກັນ

ສັນຍາສະບັບນີ້ ຄຸ້ມກັນ ຄວາມເສຍຫາຍຕ່າງໆທີ່ເກີດຂຶ້ນ ພາຍໃນ ສປປ ລາວ ເທົ່ານັ້ນ ໂດຍທີ່ສາມາດຂະຫຍາຍການຄຸ້ມກັນ ໄປປະເທດອ້ອມຂ້າງໄດ້ ໂດຍການຈ່າຍຄ່າທໍານຽມປະກັນໄພເພີ່ມຕື່ມ ຫຼື ພາຍໃຕ້ ເງື່ອນໄຂພິເສດທີ່ໄດ້ກໍານົດໄວ້ໃນ ເງື່ອນໄຂສະເພາະ.

### ມາດຕາ 3 ນິຍາມຂອງຄໍາສັບທົ່ວໄປ

3.1 ອຸປະຕິເຫດ: ເຫດການບໍ່ຄາດຄິດ ຫຼື ບໍ່ໄດ້ຕັ້ງໃຈ ການເສຍຫາຍທາງດ້ານຮ່າງກາຍແບບກະທັນຫັນ ທີ່ເກີດຂຶ້ນຕໍ່ ຜູ້ໄດ້ຮັບການປະກັນໄພ ແລະ ກ່ຽວພັນກັບ ພາຫະນະທີ່ໄດ້ກໍານົດໄວ້ໃນ ເງື່ອນໄຂສະເພາະ.

3.2 ເງື່ອນໄຂ ຂອງສັນຍາປະກັນໄພ
ຜູ້ໄດ້ຮັບການປະກັນໄພ ຕ້ອງປະຕິບັດ ເງື່ອນໄຂທັງໝົດ ຂອງສັນຍາປະກັນໄພທີ່ກໍານົດໄວ້.

### ມາດຕາ 4 ການຢືນຢັນ

ຂໍ້ມູນ ແລະ ການຢືນຢັນທີ່ ຜູ້ໄດ້ຮັບປະກັນໄພ ສະໜອງໃຫ້ແກ່ ບໍລິສັດປະກັນໄພ ຈະຕ້ອງມີຄວາມຖືກຕ້ອງ ແລະ ສອດຄ່ອງ ຕາມຄວາມເປັນຈິງ. ຖ້າ ຜູ້ໄດ້ຮັບການປະກັນໄພ ບໍ່ສະໜອງຂໍ້ມູນທີ່ຖືກຕ້ອງ, ບໍລິສັດປະກັນໄພ ຂໍສະຫງວນສິດໃນການບໍ່ຈ່າຍສິນທົດແທນປະກັນໄພ.

**4.1 ການຕີຄວາມໝາຍ**

ສັນຍາປະກັນໄພ, ໃບຢັ້ງຢືນປະກັນໄພ ຫຼື ເອກະສານຄັດຕິດ ຈະຖືກຕີຄວາມໝາຍຮ່ວມກັນ ແລະ ຄໍາສັບໃດໜຶ່ງ ທີ່ໄດ້ກໍານົດຄວາມໝາຍສະເພາະ ໃນສັນຍາສະບັບນີ້, ໃບຢັ້ງຢືນປະກັນໄພ ຫຼື ເອກະສານຄັດຕິດຈະມີຄວາມໝາຍຕາມທີ່ກໍານົດໄວ້ ບໍ່ວ່າຈະປະກົດຢູ່ສ່ວນໃດ ຂອງ ເອກະສານດັ່ງກ່າວ.

**4.2 ການເບິ່ງແຍງພາຫະນະ**

4.2.1 ໃນກໍລະນີມີ ອຸປະຕິເຫດໃດໜຶ່ງເກີດຂຶ້ນ ຫຼື ພາຫະນະທີ່ມີປະກັນໄພ ມີການເປ່ເພເສຍຫາຍ, ຜູ້ໄດ້ຮັບການປະກັນໄພ ຫຼື ຄົນຂັບລົດ ຕ້ອງຮັກສາສະພາບ ຂອງ ພາຫະນະທີ່ມີປະກັນໄພ ໄວ້ຢ່າງດີ.

4.2.2 ບໍລິສັດປະກັນໄພ ຈະບໍ່ຮັບຜິດຊອບ ຕໍ່ ຄວາມສູນເສຍ, ຄວາມເສຍຫາຍເພີ່ມຕື່ມ ຫຼື ອຸປະຕິເຫດອື່ນໆ ຖ້າຫາກ ຍັງ ສືບຕໍ່ນຳໃຊ້ ພາຫະນະທີ່ມີປະກັນໄພ ໂດຍບໍ່ມີການບຳລຸງຮັກສາ ຫຼື ສ້ອມແປງທີ່ຈຳເປັນ ພາຍຫຼັງທີ່ເກີດ ອຸບັດຕິເຫດ ຫຼື ການເປ່ເພເສຍຫາຍດັ່ງກ່າວ.

## 4.3 ຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ

ຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ ແມ່ນຈຳນວນເງິນທີ່ ຜູ້ໄດ້ຮັບການປະກັນໄພ ເປັນຜູ້ຮັບຜິດຊອບເອງ ກ່ອນທີ່ຈະສາມາດຂໍສິນທົດແທນປະກັນໄພ ນຳບໍລິສັດປະກັນໄພ ເປັນຜູ້ຮັບຜິດຊອບຈ່າຍໃນສ່ວນທີ່ເຫຼືອ.

ຜູ້ໄດ້ຮັບການປະກັນໄພຈະຕ້ອງຮັບຜິດຊອບ ຕໍ່ ຄ່າເສຍຫາຍສ່ວນທຳອິດ ຕາມທີ່ໄດ້ກຳນົດໄວ້ໃນໃບຢັ້ງຢືນປະກັນໄພ; ສຳລັບ ເງື່ອນໄຂສະເພາະໃນການສະເໜີຂໍສິນທົດແທນປະກັນໄພ ແມ່ນໄດ້ກຳນົດໄວ້ໃນ ສັນຍາປະກັນໄພສະບັບນີ້.

ຂໍ້ກຳນົດ ກ່ຽວກັບ ຄ່າເສຍຫາຍທີ່ເປັນຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ ຈະຖືກນຳໃຊ້ ໂດຍບໍ່ສຳຄັນວ່າຄວາມຮັບຜິດຊອບ ຈະມີລັກສະນະແນວໃດກໍ່ຕາມ ໃນກໍລະນີເກີດເຫດກັບ ບຸກຄົນທີ 3. ເຊິ່ງໃນນີ້ ໝາຍຄວາມວ່າ ຜູ້ໄດ້ຮັບການປະກັນໄພ ຈະຕ້ອງຮັບຜິດຊອບ ຕໍ່ ຄ່າເສຍຫາຍສ່ວນທຳອິດ ເຖິງແມ່ນວ່າ ຜູ້ກ່ຽວ ຈະບໍ່ມີຄວາມຮັບຜິດຊອບໃດໆໃນກໍລະນີດັ່ງກ່າວ. ໃນທຸກກໍລະນີ, ບໍລິສັດປະກັນໄພ ຈະຈ່າຍໃນການສ້ອມແປງຕົວຈິງ ແລະ ສູງສຸດບໍ່ເກີນ ວົງເງິນປະກັນໄພ ຕາມທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ ໂດຍການຫັກອອກຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພທີ່ໄດ້ຈ່າຍເອງໃນສ່ວນທຳອິດ.

## 4.4 ການປະກັນໄພອື່ນໆ

ໃນກໍລະນີ ມີການຮຽກຮ້ອງສິນທົດແທນປະກັນໄພ ພາຍໃນ ໄລຍະເວລາການປະກັນໄພ ສຳລັບ ພາຫະນະທີ່ມີປະກັນໄພ ແລະ ພາຫະນະດັ່ງກ່າວ ໄດ້ຮັບການຄຸ້ມກັນຄວາມເສຍຫາຍ ຫຼື ຄວາມຮັບຜິດຊອບດຽວກັນ ຈາກ ການປະກັນໄພອື່ນ, ບໍລິສັດປະກັນໄພ ຈະຈ່າຍສິນທົດແທນປະກັນໄພ ຕາມ ສັດສ່ວນໃດໜຶ່ງເທົ່ານັ້ນ.

## 4.5 ຜູ້ໄດ້ຮັບຜົນປະໂຫຍດອື່ນໆ

ໃນກໍລະນີມີ ຜູ້ຮັບຈຳນອງ ຫຼື ຝ່າຍອື່ນ ທີ່ມີຜົນປະໂຫຍດທາງດ້ານການເງິນ ໃນ ພາຫະນະທີ່ມີປະກັນໄພ ແລະ ບໍລິສັດປະກັນໄພ ກໍ່ໄດ້ຮັບແຈ້ງ ກ່ຽວກັບ ພາກສ່ວນດັ່ງກ່າວແລ້ວ, ບໍລິສັດປະກັນໄພ ຈະຈ່າຍສິນທົດແທນປະກັນໄພໃຫ້ແກ່ພາກສ່ວນດັ່ງກ່າວ ຕາມລຳດັບບຸລິມະສິດຕາມກົດໝາຍ ແລະ ຕາມຂອບເຂດຜົນປະໂຫຍດທາງດ້ານການເງິນ ຂອງຝ່າຍດັ່ງກ່າວ ສຳລັບ ຄວາມສູນເສຍທີ່ເກີດຂຶ້ນ.

## 4.6 ຄວາມສູນເສຍຂອງສະພາບທັງໝົດຂອງໂຕລົດ

ໃນກໍລະນີ ບໍ່ສາມາດສ້ອມແປງພາຫະນະທີ່ມີປະກັນໄພ ຫຼື ຄ່າໃຊ້ຈ່າຍໃນການສ້ອມແປງ ເທົ່າກັບ ຫຼື ສູງກວ່າ 70% ຫຼື ຫຼາຍກວ່າ ມູນຄ່າຕົວຈິງ ຂອງພາຫະນະ.

## 4.7 ມູນຄ່າລາຄາຕະຫຼາດ

ມູນຄ່າຕາມລາຄາຕະຫຼາດ ແມ່ນ ມູນຄ່າຂາຍໃນປະຈຸບັນໃນຕະຫຼາດ ສຳລັບ ການປ່ຽນພາຫະນະທີ່ມີປະກັນໄພກັບພາຫະນະຍີ່ຫໍ້, ລຸ້ນ, ອາຍຸການໃຊ້ງານ, ໄລຍະທາງ ແລະ ສະພາບອັນດຽວກັນ ໃນເວລາທີ່ມີຄວາມສູນເສຍ ຫຼື ຄວາມເສຍຫາຍ.

## 4.8 ການຊຳລະຄ່າທຳນຽມປະກັນໄພ

ຜູ້ຊື້ປະກັນໄພ ຈະຕ້ອງຊຳລະຄ່າທຳນຽມປະກັນໄພກ່ອນການຄຸ້ມກັນ ຈະມີຜົນສັກສິດ. ໃນກໍລະນີ ບໍ່ຊຳລະຄ່າທຳນຽມປະກັນໄພ, ບໍລິສັດປະກັນໄພ ຂໍສະຫງວນສິດໃນການຍົກເລີກສັນຍາປະກັນໄພ ຫຼື ໜັງສືສະຫຼັກຫຼັງ ໂດຍບໍ່ຈຳເປັນຕ້ອງແຈ້ງລ່ວງໜ້າໃຫ້ ຜູ້ໄດ້ຮັບການປະກັນໄພຮັບຊາບ.

## 4.9 ໜັງສືດັດແກ້ສັນຍາປະກັນໄພ

ແມ່ນໜັງສືຊ້ອນທ້າຍສັນຍາປະກັນໄພ ເຊິ່ງໃຊ້ ສຳລັບ ການເພີ່ມຕື່ມ, ປ່ຽນແປງ ຫຼື ແກ້ໄຂ ເງື່ອນໄຂການຄຸ້ມກັນ.

## I. ຜູ້ສະເໜີເອົາການປະກັນໄພ:

ຄຳວ່າ "ຜູ້ສະເໜີເອົາການປະກັນໄພ" ໝາຍເຖິງ ບຸກຄົນທີ່ມີຊື່ໃນເງື່ອນໄຂສະເພາະ ຫຼື ບຸກຄົນໃດໜຶ່ງທີ່ຈະປ່ຽນແທນ ບຸກຄົນດັ່ງກ່າວ ອັນເປັນຜົນມາຈາກການຕົກລົງຂອງ ບັນດາຝ່າຍທີ່ກ່ຽວຂ້ອງ ຫຼື ເປັນຜົນມາຈາກການເສຍຊີວິດຂອງ ຜູ້ສະເໜີເອົາການປະກັນໄພ.

### 1. ຜູ້ໄດ້ຮັບການປະກັນໄພ

#### 1.1. ບຸກຄົນທີ່ມີສິດເປັນ ຜູ້ໄດ້ຮັບການປະກັນໄພ

- ບຸກຄົນ, ບໍລິສັດ, ອົງການຈັດຕັ້ງ ຫຼື ນິຕິບຸກຄົນໃດໜຶ່ງ ສາມາດເປັນ ຜູ້ໄດ້ຮັບການປະກັນໄພ ໂດຍຈະລະບຸໄວ້ໃນ ໃບຢັ້ງຢືນປະກັນໄພ.
- ຜູ້ຂັບຂີ່ ພາຫະນະທີ່ມີປະກັນໄພ.
- ຜູ້ສະເໜີເອົາການປະກັນໄພ, ເຈົ້າຂອງ (ໃນກໍລະນີທີ່ເປັນ "ນິຕິບຸກຄົນ": ຜູ້ຕາງໜ້າຕາມກົດໝາຍ).

1.2. ພັນທະສະເພາະ ກ່ຽວກັບ ໃບອະນຸຍາດຂັບຂີ່ພາຫະນະ ແລະ ອາຍຸ ຂອງ ຜູ້ຂັບຂີ່

- ບຸກຄົນທີ່ລະບຸຂ້າງເທິງນີ້ຈະສາມາດເປັນ ຜູ້ໄດ້ຮັບການປະກັນໄພ ໄດ້ກໍ່ຕໍ່ເມື່ອ ໃນເວລາທີ່ເກີດອຸປະຕິເຫດ, ບຸກຄົນ ດັ່ງກ່າວໄດ້ປະຕິບັດ ຂໍ້ກຳນົດຕ່າງໆ ຂອງ ກົດລະບຽບ ກ່ຽວກັບ ການຂັບຂີ່ພາຫະນະດັ່ງກ່າວ ເປັນຕົ້ນແມ່ນອາຍຸ ໃນການຂັບຂີ່ ແລະ ເອກະສານອະນຸຍາດຕ່າງໆ (ໃບອະນຸຍາດຂັບຂີ່ພາຫະນະ, ໃບທະບຽນ) ຍັງຄົງໃຊ້ໄດ້ (ບໍ່ຖືກ ຍຶດ ເລີກ ຫຼື ໝົດອາຍຸ) ແລະ ຜູ້ຂັບຂີ່ ຈະຕ້ອງເປັນເຈົ້າຂອງ ເອກະສານດັ່ງກ່າວ.
- ຖ້າ ຜູ້ຂັບຂີ່ ບໍ່ປະຕິບັດຕາມ ຂໍ້ກຳນົດດັ່ງກ່າວ, ບໍລິສັດປະກັນໄພ ກໍຈະບໍ່ຮັບຜິດຊອບ ເຖິງແມ່ນວ່າ ຜູ້ຂັບຂີ່ ຈະໄດ້ ຮັບການຝຶກຂັບຂີ່ລົດ ຫຼື ໄດ້ຮັບຄວາມຊ່ວຍເຫຼືອ ຈາກ ບຸກຄົນທີ່ມີໃບອະນຸຍາດຂັບຂີ່ ກໍ່ຕາມ.
- ຂໍ້ຍົກເວັ້ນດັ່ງກ່າວ ຈະບໍ່ຖືກນຳໃຊ້ ຕໍ່ ຜູ້ຂັບຂີ່ ທີ່ມີໃບອະນຸຍາດຂັບຂີ່ພາຫະນະ ແລະ ໄດ້ແຈ້ງ ຕໍ່ ບໍລິສັດປະກັນໄພ ໃນເວລາທີ່ຮັບການປະກັນໄພ ຫຼື ຕໍ່ອາຍຸສັນຍາປະກັນໄພ ແລ້ວ ກ່ຽວກັບ ກຳນົດເວລາທີ່ ໃບອະນຸຍາດຂັບຂີ່ດັ່ງກ່າວ ຈະບໍ່ສາມາດນຳໃຊ້ໄດ້ ອັນເປັນຜົນມາຈາກສະຖານທີ່ ຫຼື ໄລຍະເວລາຢູ່ອາໄສຂອງ ເຈົ້າຂອງ ໃບອະນຸຍາດຂັບຂີ່ ດັ່ງກ່າວ.

### 2. ບຸກຄົນທີສາມ:

ບຸກຄົນທີສາມ ໝາຍເຖິງ ບຸກຄົນໃດໜຶ່ງທີ່ໄດ້ຮັບຄວາມສູນເສຍ ຄວາມເສຍຫາຍ ຈາກ ອຸປະຕິເຫດ ຍົກເວັ້ນ **ຜູ້ຂັບຂີ່**

## ມາດຕາ 5 ນິຍາມຂອງຄຳສັບ ກ່ຽວກັບ ພາຫະນະ

### 5.1. ພາຫະນະທີ່ມີປະກັນໄພ

ຄຳວ່າ <<ພາຫະນະທີ່ມີປະກັນໄພ>> ໝາຍເຖິງ:

- ໃນກໍລະນີທີ່ກຳນົດໄວ້ໃນ ເງື່ອນໄຂສະເພາະ:
  - ພາຫະນະທາງບົກທີ່ແລ່ນດ້ວຍເຄື່ອງຈັກ;
  - ພາຫະນະໃດໜຶ່ງ (ລົດພ່ວງ ຫຼື ເຄິ່ງລົດພ່ວງ) ທີ່ສ້າງຂຶ້ນເພື່ອເຊື່ອມຕິດ ກັບ ພາຫະນະທາງບົກທີ່ແລ່ນດ້ວຍເຄື່ອງຈັກ ເພື່ອຈຸດປະສົງໃນການຂົນສົ່ງ ຜູ້ໂດຍສານ ຫຼື ສິ່ງຂອງ;
- ໃນກໍລະນີການນຳໃຊ້ ໄດ້ກຳນົດໄວ້ໃນ ເງື່ອນໄຂສະເພາະ, ອຸປະກອນ (ເຊັ່ນ: ຈັກໄຖນາ ຫຼື ພາຫະນະກໍ່ສ້າງ) ເວລາ ທີ່ເຊື່ອມຕິດ ກັບ ພາຫະນະທີ່ມີປະກັນໄພ.

### 5.2. ສະພາບໃຊ້ການບໍ່ໄດ້ຂອງພາຫະນະທີ່ເຮັດປະກັນໄພ

ຜູ້ໄດ້ຮັບການປະກັນໄພ ສາມາດຂໍໃຫ້ໂຈະການຄຸ້ມກັນໄດ້ ໃນລະຫວ່າງ ໄລຍະທີ່ພາຫະນະທີ່ມີປະກັນໄພ ໃຊ້ການບໍ່ໄດ້ ໂດຍ ການຈ່າຍຄ່າທໍານຽມປະກັນໄພ ຕາມອັດຕາສ່ວນຊົ່ວຄາວ ທີ່ຄິດໄລ່ຕາມອັດຕາສ່ວນ ໃນເວລາທີ່ມີການໂຈະ ດັ່ງກ່າວ.

## ພາກທີ II. ການຄຸ້ມກັນຂອງປະກັນໄພ

### ມາດຕາ 6 ການຄຸ້ມກັນໃນຂໍ້ ກຂ. ຄວາມຮັບຜິດຊອບທາງແພ່ງ ທີ່ກ່ຽວຂ້ອງກັບການຈາລະຈອນທາງບົກ ແລະ ນອກເໜືອ ຈາກ ການຈະລາຈອນທາງບົກ (ໃນກໍລະນີມີການຊື້ເອົາການຄຸ້ມກັນດັ່ງກ່າວນີ້)

### 6.1. ຈຸດປະສົງ ຂອງ ການຄຸ້ມກັນ:

6.1.1. ຈຸດປະສົງໃນການຄຸ້ມກັນ ແມ່ນມີດັ່ງລຸ່ມນີ້:

*ການຄຸ້ມກັນໃນຂໍ້ ກ ຂ ແມ່ນຄຸ້ມກັນ ຄວາມເສຍຫາຍ ຕໍ່ ບຸກຄົນອື່ນໆ ເຊິ່ງລວມເຖິງ ຜູ້ໂດຍສານ ຂອງ ພາຫະນະທີ່ມີປະກັນໄພ ຍົກເວັ້ນ ຜູ້ຂັບຂີ່ ແລະ ຊັບສິນ ຂອງ ຜູ້ໄດ້ຮັບການປະກັນໄພ. ຂອບເຂດການຄຸ້ມກັນ ແມ່ນຂຶ້ນກັບ ວົງເງິນປະກັນໄພ ທີ່ໄດ້ກໍານົດໄວ້ໃນຕາຕະລາງການປະກັນໄພພາຫະນະ ເຊິ່ງເປັນຄວາມຮັບຜິດຊອບສູງສຸດທີ່ ບໍລິສັດປະກັນໄພ ຄຸ້ມກັນ.

6.1.2. ບໍລິສັດປະກັນໄພ ຈະທົດແທນຄ່າເສຍຫາຍ ຕາມ ຄວາມຮັບຜິດຊອບ ຂອງ ຜູ້ໄດ້ຮັບການປະກັນໄພ.

ການຈ່າຍສິນທົດແທນປະກັນໄພ ສໍາລັບ ການບາດເຈັບທາງດ້ານຮ່າງກາຍ ແລະ ຄວາມເສຍຫາຍຕໍ່ຊັບສິນ ຈະຂຶ້ນກັບອັດຕາສ່ວນຂອງຄວາມຮັບຜິດຊອບ ແຕ່ບໍ່ເກີນວົງເງິນປະກັນໄພ. ກ່ຽວກັບ ການພິການຖາວອນບາງສ່ວນ, ບໍລິສັດປະກັນໄພ ຈະຄິດໄລ່ສິນທົດແທນປະກັນໄພ ຕາມອັດຕາສ່ວນຂອງຄວາມພິການ ແລະ ຈໍານວນເງິນທີ່ຈ່າຍສໍາລັບ ການພິການຖາ ວອນ ທັງໝົດ.

6.1.3. ການຈ່າຍສິນທົດແທນປະກັນໄພ ພາຍໃຕ້ຫຼັກການຄວາມຮັບຜິດຊອບໂດຍບໍ່ຖືຄວາມຜິດ, ໂດຍຈໍາກັດສະເພາະກໍລະນີຄວາມເສຍຫາຍທາງດ້ານຮ່າງກາຍ ແລະ ໃນກໍລະນີທີ່ ຍັງບໍ່ທັນກໍານົດຄວາມຮັບຜິດຊອບຕາມກົດໝາຍ, ໃນກໍລະນີທີ່ຍັງບໍ່ທັນຮູ້ວ່າໃຜເປັນຜູ້ຮັບຜິດຊອບຄວາມເສຍຫາຍ, AZL ຈະຈ່າຍທົດແທນກ່ອນຕາມລະບຽບກົດໝາຍສູງສຸດ ຈໍານວນ 10,000,000 ກີບ ຕໍ່ ອຸປະຕິເຫດ 1 ຄັ້ງ ເຊິ່ງໃນນັ້ນ ຕໍ່ຜູ້ເຄາະຮ້າຍ 1 ຄົນ ກໍລະນີເສຍຊີວິດ ຫຼື ພິການຖາວອນທັງໝົດແມ່ນ 3,000,000 ກີບ ແລະ ສໍາລັບຄ່າໃຊ້ຈ່າຍໃນການປິ່ນປົວຕາມຄວາມເສຍຫາຍຕົວຈິງ ແຕ່ບໍ່ເກີນ 1,800,000 ກີບ. ສໍາລັບການພິການຖາວອນບາງສ່ວນ ຈະປະຕິບັດຕາມ ຂໍ້ 6.1.1 – 6.1.2 ຂ້າງເທິງ.

* ການຄຸ້ມກັນ ຄວາມຮັບຜິດຊອບທາງແພ່ງໄດ້ກໍານົດໄວ້ຢ່າງຊັດເຈນໃນ ເງື່ອນໄຂສະເພາະ.

ຫຼັກການ ຄວາມຮັບຜິດຊອບໂດຍບໍ່ຖືຄວາມຜິດ ຈະບໍ່ສາມາດຂະຫຍາຍເກີນ ຂອບເຂດການຄຸ້ມກັນແບບບັງຄັບ ທີ່ໄດ້ກໍານົດໄວ້ໃນດໍາລັດທີ່ກ່ຽວຂ້ອງ.

6.1.4. ການຄຸ້ມກັນດັ່ງກ່າວ ແມ່ນນໍາໃຊ້ຕໍ່ຄວາມສູນເສຍ ຫຼື ຄວາມເສຍຫາຍໂດຍກົງທີ່ ຜູ້ໄດ້ຮັບການປະກັນໄພ ກໍ່ໃຫ້ເກີດຂຶ້ນ ພາຍໃນ ຄວາມຮັບຜິດຊອບຂອງຕົນ ອັນເນື່ອງມາຈາກ ການບາດເຈັບທາງດ້ານຮ່າງກາຍ ຫຼື ຄວາມເສຍຫາຍຕໍ່ວັດຖຸ ທີ່ ເກີດຂຶ້ນຕໍ່ ບຸກຄົນອື່ນ ໃນສະພາບ ຫຼື ໃນລະຫວ່າງ ການສັນຈອນ, ເຊິ່ງເປັນຜົນມາຈາກ:

6.1.5. ອຸປະຕິເຫດ, ອັກຄີໄພ ຫຼື ການລະເບີດ ທີ່ເກີດຈາກ ພາຫະນະທີ່ມີປະກັນໄພ, ເຄື່ອງປະກອບ ແລະ ຜະລິດຕະພັນທີ່ນໍາໃຊ້ ສໍາລັບ ການດໍາເນີນວຽກງານ, ວັດຖຸ ແລະ ສິ່ງຂອງທີ່ ພາຫະນະດັ່ງກ່າວ ຂົນສົ່ງ;

6.1.6. ຄວາມສູນເສຍ/ຄວາມລົ້ມເຫຼວ ຂອງ ເຄື່ອງປະກອບ, ວັດຖຸ, ສິ່ງຂອງ ຫຼື ຜະລິດຕະພັນ;

6.1.7. ອຸປະຕິເຫດ ທີ່ເກີດຈາກການທີ່ ພາຫະນະ ມີການລາກ ຫຼື ດຶງ ພາຫະນະທີ່ເປ່ເພເສຍຫາຍ ຫຼື ເກີດຈາກການຖືກລາກ ດຶງ ໂດຍ ພາຫະນະອື່ນ, ຄວາມເສຍຫາຍທີ່ເກີດຈາກ ພາຫະນະເຫຼົ່ານີ້ ແມ່ນຈະບໍ່ໄດ້ຮັບການຄຸ້ມກັນ;

6.1.8. ປະການສຸດທ້າຍ, ບໍລິສັດປະກັນໄພ ຈະດໍາເນີນການທົດແທນເງິນຄືນ ສໍາລັບ ຄ່າໃຊ້ຈ່າຍທີ່ເກີດຂຶ້ນຕົວຈິງໃນການສ້ອມແປງ ທໍາຄວາມສະອາດ ພາຍໃນ ພາຫະນະ, ເສື້ອຜ້າ ຂອງ ຜູ້ໄດ້ຮັບການປະກັນໄພ ໃນເວລາຜູ້ກ່ຽວ ສະໝັກໃຈນໍາສົ່ງຄົນເຈັບຍ້ອນອຸປະຕິເຫດໃນການສັນຈອນຂອງລົດທີ່ມີການປະກັນໄພໄປທໍາການປິ່ນປົວ.

## 6.2. ການຍົກເວັ້ນການຄຸ້ມກັນ

**ຄວາມເສຍຫາຍດັ່ງຕໍ່ໄປນີ້ ຈະບໍ່ໄດ້ຮັບການຄຸ້ມກັນ:**

6.2.1. ຄວາມເສຍຫາຍທີ່ເກີດຂຶ້ນ ຕໍ່ ຜູ້ຂັບຂີ່ (ທີ່ໄດ້ຮັບການຄຸ້ມກັນ ພາຍໃຕ້ ປະກັນໄພຜູ້ຂັບຂີ່ ຖ້າມີການຊື້ປະກັນໄພດັ່ງກ່າວ).

6.2.2. ຄວາມເສຍຫາຍທີ່ເກີດຈາກຜູ້ຂັບຂີ່ ທີ່ບໍ່ມີໃບຂັບຂີ່ຖືກຕ້ອງຕາມປະເພດລົດ ຫຼື ຈາກ ບຸກຄົນ ທີ່ຂັບຂີ່ພາຫະນະ ໃນຂະນະມຶນເມົາ ບໍ່ວ່າຈະເກີດຈາກ ລົດຢາ, ການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ທຽບເທົ່າ ຫຼື ເກີນກວ່າ 0.24mg/l ຕາມ ກົດໝາຍວ່າດ້ວຍ ການຈະລາຈອນທາງບົກ ຂອງ ສປປ ລາວ.

6.2.3. ຄວາມເສຍຫາຍ ຕໍ່ ບຸກຄົນທີສາມ ເຊິ່ງເກີດຈາກອຸປະຕິເຫດ ຈາກ ການນຳໃຊ້ ພາຫະນະທີ່ມີປະກັນໄພ ເຂົ້າໃນການຂົນສົ່ງວັດຖຸອັນຕະລາຍ (ວັດຖຸໄວໄຟ, ລະເບີດ, ນ້ຳມັນເຊື້ອໄຟທີ່ເປັນກົດ ແລະ ອື່ນໆ), **ບຸກຄົນທີສາມໄດ້ຮັບຄວາມເສຍຫາຍ ຫຼື ບາດເຈັບ ຈາກ ວັດຖຸອັນຕະລາຍດັ່ງກ່າວ**. (ເຖິງຢ່າງໃດກໍ່ຕາມ ການຂົນສົ່ງນ້ຳມັນແຮ່ ຫຼື ຜະລິດ ຕະພັນຄ້າຍຄື ກັນ ບໍ່ເກີນ 500 ກິໂລກຣາມ ຫຼື 600 ລິດ ລວມເຖິງ ການຂົນສົ່ງນ້ຳມັນເຊື້ອໄຟ ສຳລັບ ໃຊ້ກັບເຄື່ອງຈັກແມ່ນບໍ່ລວມ ໃນຂໍ້ຍົກເວັ້ນນີ້).

6.2.4. ຄວາມເສຍຫາຍທີ່ເກີດຂຶ້ນໃນ ລະຫວ່າງ ການເຂົ້າຮ່ວມການແຂ່ງຂັນກິລາ (ຫຼື ການຝຶກຊ້ອມ) ຕາມ ການຮັບຮອງຂອງ ລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນ ກົດລະບຽບທີ່ມີຜົນບັງຄັບໃຊ້, ເມື່ອຜູ້ໄດ້ຮັບການປະກັນໄພ ເຂົ້າຮ່ວມໃນການ ແຂ່ງຂັນກິລາ ດ້ວຍຕົວເອງ ໃນຖານະເປັນຄູ່ແຂ່ງ, ຜູ້ຈັດງານ ຫຼື ຜູ້ຕາງໜ້າ ຂອງ ພາກສ່ວນທີ່ກ່າວມານັ້ນ.

6.2.5. ຄວາມເສຍຫາຍທາງດ້ານຊັບສິນ ເຊັ່ນ: ຊົງຊັ່ງນ້ຳໜັກ, ຂົວ, ຂົວທາງລົດໄຟ, ຖະໜົນ, ທາງຄົນຍ່າງ ຫຼື ສິ່ງທີ່ຢູ່ກ້ອງສິ່ງດັ່ງກ່າວ ທີ່ເກີດຈາກ ການສັ່ນສະເທືອນ ຫຼື ນ້ຳໜັກ ຂອງ ພາຫະນະ ຫຼື ນ້ຳໜັກ ຂອງ ສິ່ງຂອງທີ່ບັນທຸກ.

6.2.6. ຄວາມເສຍຫາຍໃດໜຶ່ງຕໍ່ສາຍໄຟຕ່າງໆ ເຊັ່ນ: ສາຍໄຟຟ້າ, ສາຍໂທລະສັບ, ສາຍໂທລະພາບ ຫຼື ສິ່ງທີ່ຢູ່ເທິງ ສິ່ງດັ່ງກ່າວ ທີ່ເກີດຈາກຄວາມສູງຂອງ ພາຫະນະ ຫຼື ສິ່ງຂອງທີ່ຂົນສົ່ງ (ມາດຕາ 34, ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 188, ລົງວັນທີ 03 ກໍລະກົດ 2007).

6.2.7. ຄວາມເສຍຫາຍທີ່ເກີດຂຶ້ນຕໍ່ອະສັງຫາລິມະຊັບ, ວັດຖຸສິ່ງຂອງ ຫຼື ສັດ ທີ່ມອບໝາຍໃຫ້ ຫຼື ກຳນົດໃຫ້ ຜູ້ຂັບຂີ່ ຮັບ ຜິດຊອບ; ເຖິງຢ່າງໃດກໍ່ຕາມ, ຂໍ້ຍົກເວັ້ນດັ່ງກ່າວ ຈະບໍ່ຖືກນຳໃຊ້ ຕໍ່ ຜົນຕາມມາທາງດ້ານການເງິນ ທີ່ ຜູ້ໄດ້ຮັບການປະກັນໄພ ຈະຕ້ອງຮັບຜິດຊອບໃນກໍລະນີມີຄວາມເສຍຫາຍຈາກ ອັກຄີໄພ ຫຼື ການລະເບີດ ທີ່ເກີດຂຶ້ນຕໍ່ຕຶກອາຄານທີ່ ພາຫະນະທີ່ມີປະກັນໄພ ຈອດຢູ່. (ໃນກໍລະນີມີການຕົກລົງກັນ, ຜູ້ຊື້ປະກັນໄພ ຈະຕ້ອງຊື້ປະກັນໄພພິເສດ ເພື່ອ ຄຸ້ມກັນຄວາມສ່ຽງດັ່ງກ່າວ)

6.2.8. ຄວາມເສຍຫາຍທີ່ເກີດຂຶ້ນ ຕໍ່ ສິນຄ້າ ແລະ ວັດຖຸສິ່ງຂອງ ທີ່ຂົນສົ່ງໂດຍ ພາຫະນະທີ່ມີປະກັນໄພ ລວມເຖິງ ຄວາມເສຍຫາຍ ທີ່ເກີດຈາກ ສິນຄ້າ ແລະ/ຫຼື ວັດຖຸສິ່ງຂອງດັ່ງກ່າວເອງ ຕໍ່ ບຸກຄົນ ຫຼື ຊັບສິນ ຂອງ ຜູ້ອື່ນ.

6.2.9. ຄວາມເສຍຫາຍທີ່ເກີດ ຈາກ ສົງຄາມກັບສັດຕູຕ່າງປະເທດ ຫຼື ສົງຄາມກາງເມືອງ;

6.2.10. ຄວາມເສຍຫາຍທີ່ເກີດ ຈາກ ຜູ້ໄດ້ຮັບການປະກັນໄພ ໂດຍເຈດຕະນາເປັນຕົ້ນແມ່ນ ອຸບັດຕິເຫດ ຫຼື ຄວາມເສຍຫາຍທີ່ຜູ້ໄດ້ຮັບຜົນປະໂຫຍດ, ຜູ້ຂັບຂີ່ພາຫະນະ, ຜູ້ໂດຍສານ ຫຼື ບຸກຄົນທີສາມກໍ່ຂຶ້ນໂດຍເຈດຕະນາ ເພື່ອຈຸດປະສົງໃນການທຳຮ້າຍຮ່າງກາຍຕົນເອງ, ຂ້າຕົວຕາຍ, ພະຍາຍາມຂ້າຕົວຕາຍ; ຫຼື ອາການປ່ວຍທາງຈິດ, ອຸບັດຕິເຫດ, ຄວາມສູນເສຍ ຫຼື ຄວາມເສຍຫາຍອື່ນໆທີ່ສ້າງຂຶ້ນໂດຍເຈດຕະນາ ໂດຍຜູ້ໄດ້ຮັບການປະກັນໄພ, ຜູ້ຂັບຂີ່ພາຫະນະ ຫຼື ບຸກ ຄົນອື່ນທີ່ດຳເນີນການໃນນາມ ຂອງ ຜູ້ໄດ້ຮັບການປະກັນໄພ ໂດຍມີການມອບໝາຍຢ່າງຈະແຈ້ງ ຫຼື ເປັນໄນໆ...

6.2.11. ເງິນປັບໄໝ ແລະ ເງິນອາງໂທດໃດໜຶ່ງ.

6.2.12. ຄວາມເສຍຫາຍທີ່ເກີດຈາກ ການຈະລາຈົນ, ການປະທ້ວງ ຫຼື ກຸ່ມຄົນທີ່ເຄື່ອນໄຫວຢ່າງເປີດເຜີຍ.

6.2.13. ຄວາມເສຍຫາຍ ຈາກ ອຸປະຕິເຫດທີ່ ບໍລິສັດປະກັນໄພ ພົບເຫັນວ່າ ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ຂັບຂີ່ພາຫະນະ ມີການປົກປິດ, ປອມແປງ, ບໍ່ເປີດເຜີຍຂໍ້ມູນ ຫຼື ເປີດເຜີຍຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ບໍ່ສອດຄ່ອງຕາມຄວາມເປັນຈິງ ກ່ຽວກັບ ອຸປະຕິເຫດ (ເຊັ່ນ: ສະຖານທີ່, ເວລາ, ບຸກຄົນທີ່ມີສ່ວນພົວພັນ ແລະ ອື່ນໆ), ປະຕິເສດການໃຫ້ຄວາມຮ່ວມມື ຕໍ່ ຕຳຫຼວດ ແລະ/ຫຼື ເຈົ້າໜ້າທີ່ກ່ຽວຂ້ອງ, ຫຼື ລົບໜີຈາກ ສະຖານທີ່ເກີດເຫດ ເພື່ອຫຼີກລ້ຽງ ຄວາມຮັບຜິດຊອບຕາມກົດ

ໝາຍ ລວມເຖິງ ການກະທຳທີ່ບໍ່ຈິງໃຈ ທີ່ ບໍລິສັດປະກັນໄພ ພົບເຫັນບໍ່ວ່າກ່ອນ, ໃນລະຫວ່າງ ຫຼື ພາຍຫຼັງທີ່ ບໍລິສັດປະກັນໄພ ໄດ້ຮັບເອົາ ໃບສະເໜີຂໍສິນທົດແທນປະກັນໄພແລ້ວ.

6.2.14. ການສ້ອມແປງເບື້ອງຕົ້ນ ຢູ່ ສະຖານທີ່ເກີດອຸບັດຕິເຫດ, ຄ່າໃຊ້ຈ່າຍໃນການລາກ, ອູ່ສ້ອມແປງ, ຄ່າໃຊ້ຈ່າຍໃນການເຄື່ອນຍ້າຍ ພາຫະນະ ຫຼື ສິ່ງຂອງທີ່ຂົນສົ່ງ ໄປໄວ້ ອູ່ສ້ອມແປງລົດທີ່ໃກ້ທີ່ສຸດ ເຊິ່ງໃນຄວາມເປັນຈິງແລ້ວ ຄ່າໃຊ້ຈ່າຍດັ່ງກ່າວແມ່ນຜູ້ໄດ້ຮັບການປະກັນໄພ ເປັນຜູ້ຮັບຜິດຊອບ (ເຖິງຢ່າງໃດກໍ່ຕາມ ໃນກໍລະນີ ມີອຸບັດຕິເຫດເກີດຂຶ້ນ , ບໍລິສັດປະກັນໄພ ຈະທົດແທນເງິນຄືນ ສຳລັບ ຄ່າໃຊ້ຈ່າຍທີ່ກ່າວມາຂ້າງເທິງ ໃນຈຳນວນ 20% ຂອງ ຄ່າໃຊ້ຈ່າຍໃນການສ້ອມແປງທັງໝົດໂດຍບໍ່ເກີນ 5,000,000 ກີບ) ເຊິ່ງສິນທົດແທນປະກັນໄພດັ່ງກ່າວ ແມ່ນລວມຢູ່ໃນ ວົງເງິນປະກັນໄພທັງໝົດ ຂອງ ການຄຸ້ມກັນຄວາມເສຍຫາຍທາງດ້ານວັດຖຸຕໍ່ບຸກຄົນທີ່ສາມ (ການຄຸ້ມກັນ ຂໍ້ ກຂ).

## ມາດຕາ 7 ຄວາມເສຍຫາຍຕໍ່ໂຕລົດປະກັນໄພ: (ໃນກໍລະນີມີການຊື້ເອົາການຄຸ້ມກັນດັ່ງກ່າວນີ້)

### A. **ຈຸດປະສົງຂອງການຄຸ້ມກັນ**

ຄວາມເສຍຫາຍຕໍ່ພາຫະນະທີ່ມີປະກັນໄພ ແມ່ນຂຶ້ນກັບ ວົງເງິນປະກັນໄພ ທີ່ໄດ້ກຳນົດໄວ້ໃນ ເງື່ອນໄຂສະເພາະ;

7.1 ວົງເງິນປະກັນໄພ ອາດຈະຕໍ່າກວ່າ ຫຼື ເທົ່າກັບ ມູນຄ່າຕົວຈິງ ຂອງ ລົດ ອີງຕາມເງື່ອນໄຂຂອງຜະລິດຕະພັນປະກັນໄພ.

7.2 ການຄຸ້ມກັນ ແມ່ນ ສຳລັບ ຄວາມເສຍຫາຍທີ່ເກີດຂຶ້ນ ພາຍໃຕ້ ເງື່ອນໄຂລຸ່ມນີ້:

- a) **ການຕຳ** ກັບ ວັດຖຸເຄື່ອນທີ່ ຫຼື ບໍ່ເຄື່ອນທີ່ (ສຳລັບ ຄວາມເສຍຫາຍທີ່ເປັນຜົນມາຈາກ ການຕຳ ທີ່ເກີດຂຶ້ນຢູ່ ພາຍນອກ ອູ່ສ້ອມແປງ, ອາຄານສະຖານທີ່ ທີ່ຜູ້ໄດ້ຮັບການປະກັນໄພ ຢູ່ອາໄສ, ການຕຳ ພາຫະນະ ຫຼື ສັດ ຫຼື ຄົນຍ່າງ, ເຖິງຢ່າງໃດກໍ່ຕາມ ບໍລິສັດປະກັນໄພ ຈະຮັບຜິດຊອບໃນກໍລະນີທີ່ ສາມາດລະບຸຕົວຕົນ ຂອງ ເຈົ້າຂອງພາຫະນະ ຫຼື ສັດ ຫຼື ຄົນຍ່າງໄດ້ ໂດຍບໍ່ແມ່ນ ການລະບຸຕົວຕົນໂດຍ ຜູ້ໄດ້ຮັບການປະກັນໄພ ຫຼື ບຸກຄົນທີ່ ຜູ້ໄດ້ຮັບການປະກັນໄພຈະຕ້ອງຮັບຜິດຊອບ.
- b) **ການປີ້ນຂວ້າມ**,
- c) **ແກ້ວແວ່ນແຕກ**
- d) **ໄຟໄໝ້**, ໃນກໍລະນີນີ້ ແມ່ນຄຸ້ມກັນ ຄວາມເສຍຫາຍທີ່ເກີດຈາກ ໄຟໄໝ້ ຫຼື ການລະເບີດ (ໄຟໄໝ້ ຫຼື ການລະເບີດເກີດຈາກພາຫະນະເອງ ທີ່ມີຄວາມຮ້ອນຜິດປົກກະຕິ ຫຼື ມີການຮົ່ວໄຫຼ ຂອງ ນ້ຳມັນ ທີ່ເປັນສາເຫດ ຂອງ ໄຟໄໝ້ ຫຼື ການລະເບີດດັ່ງກ່າວ).
- e) **ການລັກ** (ການລັກແມ່ນການກະທຳທີ່ຜິດກົດໝາຍ ເຊິ່ງການກະທຳດັ່ງກ່າວເປັນການເອົາຊັບສິນ ຂອງ ບຸກຄົນອື່ນໂດຍ ບໍ່ໄດ້ຮັບອະນຸຍາດຢ່າງສະໝັກໃຈ ຫຼື ເປັນການເອົາມາດ້ວຍການຂົ່ມຂູ່ ຫຼື ໃຊ້ຄວາມຮຸນແຮງ), ບໍລິສັດປະກັນໄພ ຈະຄຸ້ມກັນຄວາມສູນເສຍ ເນື່ອງຈາກ ການລັກ ຫຼື ຄວາມເສຍຫາຍ ຂອງ ພາຫະນະທີ່ມີປະກັນໄພ ພາຍຫຼັງ ມີການລັກ ຫຼື ມີການພະຍາຍາມລັກ. ໂດຍມີການຕົກລົງ ຂອງ ບໍລິສັດປະກັນໄພ, ຄ່າໃຊ້ຈ່າຍທີ່ເກີດຂຶ້ນ ຕໍ່ ຜູ້ໄດ້ຮັບປະກັນໄພ ເພື່ອຈຸດປະສົງໃນການຟື້ນຟູ ພາຫະນະທີ່ຖືກລັກ ກໍໄດ້ຮັບການຄຸ້ມກັນເຊັ່ນດຽວກັນ.
- f) ການປະກັນໄພ ແມ່ນຈະຄຸ້ມກັນທຸກພາກສ່ວນຂອງ ພາຫະນະທີ່ມີປະກັນໄພ ລວມເຖິງ ສິ່ງປະກອບ, ອຸປະກອນການສ້ອມແປງ ແລະ ອາໄຫຼ່ຕ່າງໆ ຍີ່ຫໍ້ ແລະ ລຸ້ນດຽວກັນເທົ່ານັ້ນ ໂດຍບໍ່ມີຄ່າໃຊ້ຈ່າຍໃດໆເພີ່ມຕື່ມ ສຳລັບ ລຸ້ນ ຂອງອຸປະກອນ ແລະ ອາໄຫຼ່ດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ, ໃນກໍລະນີທີ່ ບໍ່ສາມາດຊອກຫາອາໄຫຼ່ຂອງ ອຸປະກອນທີ່ຈຳເປັນໃນການສ້ອມແປງພາຫະນະຢູ່ສະຖານທີ່ດັ່ງກ່າວ ຫຼື ເປັນລຸ້ນທີ່ລ້າສະໄໝແລ້ວ, ຄ່າໃຊ້ຈ່າຍໃນການຊອກຫາອາໄຫຼ່ ແລະ ອຸປະກອນດັ່ງກ່າວຈະຕ້ອງບໍ່ສູງກວ່າລາຄາທີ່ຮ້ານຂາຍອາໄຫຼ່ລົດຍີນສະເໜີໃຫ້. ການທົດແທນຄ່າເສຍຫາຍທີ່ເກີດຕໍ່ພາຫະນະທີ່ຖືກຄຸ້ມກັນ:

### B. **ບໍລິສັດປະກັນໄພ ມີສິດພິຈາລະນາດັ່ງລຸ່ມນີ້**:

a) ການສ້ອມແປງ, ການປົວແປງ ຫຼື ປ່ຽນແທນ ພາຫະນະທີ່ມີປະກັນໄພ, ສິ່ງປະກອບທີ່ເປັນມາດຕະຖານ

b) ຈ່າຍຄ່າເສຍຫາຍເປັນເງິນສົດ ສຳລັບໂຕລົດປະກັນໄພ.

**C. ຂໍ້ຈຳກັດໃນການທົດແທນຄ່າເສຍຫາຍ:**

ຖ້າຫາກພາຫະນະທີ່ມີປະກັນໄພເສຍຫາຍໝົດຄັນ, ສິນທົດແທນປະກັນໄພສູງສຸດ ແມ່ນມູນຄ່າຕະຫຼາດຕົວຈິງຂອງພາຫະນະທີ່ມີປະກັນໄພ ໃນເວລາທີ່ມີຄວາມເສຍຫາຍເກີດຂຶ້ນ ຫຼື ມູນຄ່າທີ່ໄດ້ກຳນົດໄວ້ໃນ ໃບຢັ້ງຢືນປະກັນໄພ ແລ້ວແຕ່ກໍລະນີໃດ ມີມູນຄ່າຕ່ຳກວ່າ. ໃນເວລາທີ່ຜູ້ໄດ້ຮັບການປະກັນໄພໄດ້ຮັບສິນທົດແທນປະກັນໄພ, ພາຫະນະທີ່ໄດ້ຮັບການຄຸ້ມກັນຈະຕົກເປັນ ກຳມະສິດ ຂອງ ບໍລິສັດປະກັນໄພໂດຍອັດຕະໂນມັດ ໂດຍທີ່ສັນຍາປະກັນໄພ ແມ່ນຈະເປັນໂມຄະ ແລະ ບໍ່ມີການສົ່ງຄືນເງິນຄ່າທຳນຽມປະກັນໄພທີ່ຍັງເຫຼືອ ໃຫ້ແກ່ ຜູ້ໄດ້ຮັບການປະກັນໄພ.

a) ໃນກໍລະນີທີ່ ວົງເງິນຄຸ້ມກັນຂອງໂຕລົດປະກັນໄພ ຫາກຕ່ຳກວ່າ ມູນຄ່າຕະຫຼາດ ຂອງ ພາຫະນະດັ່ງກ່າວ, ບໍລິສັດປະກັນໄພ ຈະສ້ອມແປງລົດ ຫຼື ຈ່າຍເງິນຄ່າສ້ອມແປງ ຕາມສັດສ່ວນມູນຄ່າທີ່ໄດ້ກຳນົດໄວ້ໃນ ໃບຢັ້ງຢືນປະກັນໄພ ໃນເວລາທີ່ ມີຄວາມເສຍຫາຍເກີດຂຶ້ນ.

b) ເງື່ອນໄຂສະເພາະ ກ່ຽວກັບ ຄວາມເສຍຫາຍທີ່ເກີດ ຕໍ່ ກະຈົກໜ້າລົດ ອັນເປັນຜົນມາຈາກ ອຸປະຕິເຫດ, ການຄຸ້ມກັນແມ່ນນຳໃຊ້ ຂໍ້ກຳນົດໃນເງື່ອນໄຂສະເພາະຂອງສັນຍາປະກັນໄພ.

- ກໍລະນີສ້ອມແປງ, ບໍລິສັດປະກັນໄພ ຈະທົດແທນຄ່າສ້ອມແປງທັງໝົດ;
- ກໍລະນີປ່ຽນໃໝ່, ບໍລິສັດປະກັນໄພ ຈະຄຸ້ມກັນການປ່ຽນແທນດັ່ງກ່າວ ເຊິ່ງຈະຫັກອອກກ່ອນຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພຕາມທີ່ໄດ້ລະບຸໃນສັນຍາປະກັນໄພ

**ໝາຍເຫດ:** ເຕັກໂນໂລຊີ ທີ່ນຳໃຊ້ເຂົ້າໃນການສ້ອມແປງ ກະຈົກໜ້າລົດ ອາດຈະໃຫ້ຜົນລັບທີ່ແຕກຕ່າງກັນ ໂດຍຂຶ້ນກັບຂອບເຂດຄວາມເສຍຫາຍ ແລະ ສະຖານທີ່ສ້ອມແປງ.

**D. ການກວດກາສະພາບລົດ:**

ສຳລັບປະກັນໄພທີ່ຄຸ້ມກັນພາຫະນະທີ່ມີປະກັນໄພ ຈະຕ້ອງມີການກວດກາພາຫະນະກ່ອນທີ່ ບໍລິສັດປະກັນໄພຈະໃຫ້ການຄຸ້ມກັນປະກັນໄພ ແລະ ໃນທຸກເວລາທີ່ມີການປ່ຽນແປງ ຫຼື ປັບປຸງພາຫະນະດັ່ງກ່າວ. ໃນກໍລະນີ ພາຫະນະບໍ່ໄດ້ຮັບການກວດກາ ຈາກເຄືອຂ່າຍຂອງ ບໍລິສັດປະກັນໄພ AZL, AZL ຈະຄຸ້ມກັນພາຫະນະດັ່ງກ່າວພຽງແຕ່ໃນກໍລະນີຄວາມເສຍຫາຍທີ່ເກີດ ຈາກການຕຳກັບພາຫະນະທີ່ແລ່ນດ້ວຍເຄື່ອງຈັກຄັນອື່ນເທົ່ານັ້ນ. ຖ້າຫາກມີການກວດກາສຳເລັດ, AZL ຈະຄຸ້ມກັນ ຕາມທີ່ໄດ້ ກຳນົດໄວ້ໃນ ສັນຍາ.

## ມາດຕາ 8 ຂໍ້ຍົກເວັ້ນການຄຸ້ມກັນ

**ຄວາມເສຍຫາຍດັ່ງຕໍ່ໄປນີ້ ຈະບໍ່ໄດ້ຮັບການຄຸ້ມກັນ:**

8.1 ຄວາມເສຍຫາຍທີ່ເກີດ ຈາກ ຜູ້ໄດ້ຮັບການປະກັນໄພ ໂດຍເຈດຕະນາ ເປັນຕົ້ນແມ່ນ ອຸປະຕິເຫດ ຫຼື ຄວາມເສຍຫາຍທີ່ ຜູ້ໄດ້ຮັບຜົນປະໂຫຍດ, ຜູ້ຂັບຂີ່ພາຫະນະ, ຜູ້ໂດຍສານ ຫຼື ບຸກຄົນທີສາມ ກໍ່ຂຶ້ນໂດຍເຈດຕະນາ ເພື່ອຈຸດປະສົງໃນການທຳຮ້າຍຮ່າງກາຍຕົນເອງ, ຂ້າຕົວຕາຍ, ພະຍາຍາມຂ້າຕົວຕາຍ; ຫຼື ອາການປ່ວຍທາງຈິດ, ອຸປະຕິເຫດ, ຄວາມສູນເສຍ ຫຼື ຄວາມເສຍຫາຍອື່ນໆ ທີ່ສ້າງຂຶ້ນໂດຍເຈດຕະນາ ໂດຍ ຜູ້ໄດ້ຮັບການປະກັນໄພ, ຜູ້ຂັບຂີ່ພາຫະນະ ຫຼື ບຸກຄົນອື່ນ ທີ່ດຳເນີນການໃນນາມ ຂອງ ຜູ້ໄດ້ຮັບການປະກັນໄພ ໂດຍມີການມອບໝາຍຢ່າງຈະແຈ້ງ ຫຼື ເປັນໄນງ...

8.2 ຄວາມເສຍຫາຍທີ່ເກີດຈາກຜູ້ຂັບຂີ່ ທີ່ບໍ່ມີໃບຂັບຂີ່ຖືກຕ້ອງຕາມປະເພດລົດ ຫຼື ໃນຂະນະມຶນເມົາ, ບໍ່ວ່າຈະເກີດຈາກລິດຢາເສບຕິດ, ສານເຄມີທີ່ມີລິດຕໍ່ປະສາດ, ການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ທຽບເທົ່າ ຫຼື ເກີນກວ່າ 0.24mg/l ໃນລົມຫາຍໃຈ ຕາມ ກົດໝາຍວ່າດ້ວຍການຈະລາຈອນທາງບົກ ຂອງ ສປປ ລາວ.

8.3 ຄວາມເສຍຫາຍ ຕໍ່ ພາຫະນະທີ່ມີປະກັນໄພ ຫຼື ບຸກຄົນທີສາມ ເຊິ່ງເກີດຈາກ ອຸປະຕິເຫດ ຈາກ ການນຳໃຊ້ ພາຫະນະທີ່ມີປະກັນໄພ ເຂົ້າໃນການຂົນສົ່ງວັດຖຸອັນຕະລາຍ (ວັດຖຸໄວໄຟ, ລະເບີດ, ນ້ຳມັນເຊື້ອໄຟທີ່ເປັນກົດ ແລະ ອື່ນໆ); ແລະ ຜູ້ໄດ້ຮັບການປະກັນໄພ ຫຼື ບຸກຄົນທີສາມໄດ້ຮັບບາດເຈັບ ຈາກ ວັດຖຸອັນຕະລາຍດັ່ງກ່າວ. (ເຖິງຢ່າງໃດກໍ່ຕາມ ການຂົນສົ່ງນ້ຳມັນແຮ່ ຫຼື ຜະລິດຕະພັນຄ້າຍຄືກັນ ບໍ່ເກີນ 500 ກິໂລກຣາມ ຫຼື 600 ລິດ ລວມເຖິງ ການຂົນສົ່ງນ້ຳມັນເຊື້ອໄຟ ສຳລັບ ໃຊ້ກັບເຄື່ອງຈັກ ແມ່ນບໍ່ລວມໃນຂໍ້ຍົກເວັ້ນນີ້).

8.4 ຄວາມເສຍຫາຍທຸກຮູບແບບ ທີ່ເກີດຂື້ນຕໍ່ ພາຫະນະ ໃນເວລາທີ່ມີການເຄື່ອນຍ້າຍໂດຍ ເຈົ້າໜ້າທີ່ຕຳຫຼວດ ຫຼື ທະຫານ.

8.5 ຄວາມເສຍຫາຍທີ່ເກີດ ຈາກ ໄຟໄໝ້ ອັນເປັນຜົນມາຈາກ ການຂີ້ລັກງັດແງະ ໂດຍບຸກຄົນໃດໜຶ່ງ ທີ່ໄດ້ຮັບມອບ ໝາຍໃຫ້ ນຳໃຊ້ ຫຼື ຄອບຄອງ ພາຫະນະຕາມ ສັນຍາເຊົ່າ, ສັນຍາເຊົ່າສິນເຊື່ອ, ສັນຍາເຊົ່າຊື້, ສັນຍາຊວດຈຳ; ຫຼື ໂດຍບຸກຄົນທີ່ລົງນາມໃນສັນຍາດັ່ງກ່າວ

8.6 ຄວາມເສຍຫາຍທີ່ເກີດ ຕໍ່ ພາຫະນະ ອັນເປັນຜົນມາຈາກ ສິນຄ້າ ແລະ ວັດຖຸສິ່ງຂອງທີ່ບັນຈຸຢູ່ໃນລົດ.

8.7 ຄວາມເສຍຫາຍທີ່ເກີດ ຈາກ ການຂົນສິນຄ້າຂຶ້ນ ຫຼື ລົງ ຈາກພາຫະນະ.

8.8 ຄວາມເສຍຫາຍທີ່ເກີດຂື້ນໃນ ລະຫວ່າງ ການເຂົ້າຮ່ວມການແຂ່ງຂັນກິລາ (ຫຼື ການຝຶກຊ້ອມ) ຕາມການຮັບຮອງ ຂອງ ລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນ ກົດລະບຽບທີ່ມີຜົນບັງຄັບໃຊ້, ເມື່ອຜູ້ໄດ້ຮັບການປະກັນໄພ ເຂົ້າຮ່ວມໃນການ ແຂ່ງຂັນກິລາ ດ້ວຍຕົວເອງ ໃນຖານະເປັນຄູ່ແຂ່ງ, ຜູ້ຈັດງານ ຫຼື ຜູ້ຕາງໜ້າ ຂອງ ພາກສ່ວນທີ່ກ່າວມານັ້ນ.

8.9 ຄວາມເສຍຫາຍທີ່ເກີດ ຈາກ ໄພພິບັດທາງທຳມະຊາດ ເຊັ່ນ: ແຜ່ນດິນໄຫວ, ພູເຂົາໄຟລະເບີດ, ຄື້ນຍັກ, ພາຍຸໄຕ້ຝຸ່ນ, ພາຍຸເຮີ ລິເຄນ, ພາຍຸທໍນາໂດ, ພາຍຸໝຸນ, ອັກຄີໄພ ຫຼື ການລະເບີດ.

8.10 ໃນກໍລະນີໄຟໄໝ້, ຄວາມເສຍຫາຍທີ່ເກີດຈາກການດັດແປງລົດ ຈະບໍ່ໄດ້ຮັບການຄຸ້ມກັນ.

8.11 ຄວາມເສຍຫາຍທາງອ້ອມ ເຊັ່ນວ່າ: ການເສຍສິດນຳໃຊ້, ການບໍ່ໄດ້ຮັບຜົນປະໂຫຍດ ແລະ ການເສື່ອມສະພາບຂອງພາຫະນະ.

8.12 ຄວາມເສຍຫາຍຈາກການນຳໃຊ້ຢ່າງເປັນປົກກະຕິ ຫຼື ເສື່ອມສະພາບຈາກການໃຊ້ງານ ຈະບໍ່ໄດ້ຮັບການຄຸ້ມກັນ.

8.13 ຄວາມເສຍຫາຍ ທີ່ອາດຈະເກີດ ຈາກ ຄວາມບົກຜ່ອງໃນການບຳລຸງຮັກສາ, ເຂົ້າໝ້ຽງ ແລະ ການກັດກ່ອນ ຫຼື ພາຫະນະ ເສື່ອມສະພາບ, ບໍ່ສົມບູນ ຫຼື ມີຂໍ້ບົກຜ່ອງ ໃນຂັ້ນຕອນການຜະລິດລົດ ເຊັ່ນ: ສະພາບພື້ນດິນບໍ່ລຽບ ຫຼື ບໍ່ດີ ເຊິ່ງສົ່ງຜົນກະທົບ ຕໍ່ ການຂັບເຄື່ອນ ຂອງ ພາຫະນະ, ອາໄຫຼ່ບໍ່ເຮັດວຽກ, ຄວາມເສຍຫາຍຈາກການນຳໃຊ້ເປັນເວລາດົນນານ ທີ່ເຮັດໃຫ້ ລົດເສື່ອມໂຊມລົງ, ມີຄວາມສູນເສຍ ຫຼື ເສຍຫາຍ ຈາກ ການນຳໃຊ້ປົກກະຕິໂດຍ ຜູ້ໄດ້ຮັບການປະກັນໄພ, ໃນນາມ ຂອງ ຜູ້ໄດ້ຮັບການປະກັນໄພ ຫຼື ບຸກຄົນໃດໜຶ່ງ.

8.14 **ກະຈົກໜ້າ**: ການຄຸ້ມກັນ ແມ່ນຈະມີການນຳໃຊ້ຂໍ້ກຳນົດ ກ່ຽວກັບ ຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ ຕາມທີ່ລະບຸໃນເງື່ອນໄຂຂອງສັນຍາປະກັນໄພ.

8.15 **ຢາງລົດ & ຂອບຢາງລົດ**: ຄວາມເສຍຫາຍ ຈາກການໃຊ້ງານ (ທີ່ບໍ່ແມ່ນອຸປະຕິເຫດ) ຈະບໍ່ໄດ້ຮັບການຄຸ້ມກັນ. ເຖິງຢ່າງໃດກໍ່ຕາມ, ສຳລັບຄວາມເສຍຫາຍທີ່ເກີດຈາກ ອຸປະຕິເຫດ, ບໍລິສັດ ຈະຄຸ້ມກັນ ໂດຍພາຍໃຕ້ເງື່ອນໄຂຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ (ຖ້າມີ) ຕາມສັນຍາປະກັນໄພຕົວຈິງ,

8.16 **ຮອຍຂູດ**: ຄວາມເສຍຫາຍຈາກ ຈາກການໃຊ້ງານ (ທີ່ບໍ່ແມ່ນອຸປະຕິເຫດ) ຈະບໍ່ໄດ້ຮັບການຄຸ້ມກັນ ພາຍໃຕ້ ເງື່ອນໄຂທົ່ວໄປ; ເຖິງຢ່າງໃດກໍ່ຕາມ, ສຳລັບຄວາມເສຍຫາຍທີ່ເກີດຂື້ນ ຈາກ ອຸປະຕິເຫດ, ບໍລິສັດ ຈະຄຸ້ມກັນໂດຍພາຍໃຕ້ເງື່ອນໄຂຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ (ຖ້າມີ) ຕາມສັນຍາປະກັນໄພຕົວຈິງ, ຄວາມເສຍຫາຍທີ່ເກີດຈາກການໃຊ້ງານ (ທີ່ບໍ່ແມ່ນອຸປະຕິເຫດ) ທີ່ບໍ່ໄດ້ຮັບການຄຸ້ມກັນ ເປັນຕົ້ນມີດັ່ງຕໍ່ໄປນີ້:

8.16.1 ຮອຍຂູດ ຕາມຄັນຈັບ ຫຼື ໂຄງປະຕູລົດ, ຄວາມເສຍຫາຍ ຢູ່ ຖານຢຽບຂ້າງລົດ,

8.16.2 ຮອຍໂປກ ຫຼື ຮອຍບຸ້ມ ຢູ່ ມຸມແຈ, ໂຄງ ຫຼື ຂອບປະຕູ, ຂອບຢາງລົດ, ກັນຊົນ ແລະ ອື່ນໆ.

8.16.3 ຮອຍບຸ້ມ ຫຼື ຮອຍຂູດ ຢູ່ ຕົວລົດ ເຊັ່ນ: ຮອຍຂູດທີ່ເກີດ ຈາກ ການໃຊ້ຜ້າເປື້ອນທຳຄວາມສະອາດລົດ, ການຕຳກັບວັດຖຸຂະໜາດນ້ອຍ ເຊັ່ນ: ຫີນ, ຝຸ່ນໄມ້ ແລະ ອື່ນໆ.

8.17 ຄວາມເສຍຫາຍໃດໜຶ່ງ ທີ່ເກີດຈາກສັດ ແມ່ນບໍ່ໄດ້ຮັບການຄຸ້ມກັນ (ເວັ້ນເສຍແຕ່ເກີດຈາກການຕຳ).

8.18 ການປ່ຽນ ຫຼື ການສ້ອມແປງ ທີ່ປັບປຸງ ລົດປະກັນໄພ ໃຫ້ດີຂື້ນເກີນກວ່າ ສະພາບ ຂອງ ລົດ ໃນເວລາທີ່ອອກສັນຍາປະກັນໄພ ແມ່ນບໍ່ໄດ້ຮັບການຄຸ້ມກັນ;

8.19 ການເຄືອບແກ້ວ ກ່ອນ ຫຼື ພາຍຫຼັງການເຮັດສັນຍາປະກັນໄພ ແມ່ນຈະບໍ່ໄດ້ຮັບການຄຸ້ມກັນ.

8.20 ຄວາມເສຍຫາຍໃດໜຶ່ງ ເນື່ອງຈາກ ຄວາມລົ້ມເຫຼວຂອງ ລະບົບປະຕິບັດງານ ຫຼື ຊອັບແວຣ ຂອງ ພາຫະນະ ເຊັ່ນ: ຄວາມລົ້ມເຫຼວ, ການເປ່ເພ ຫຼື ຄວາມເສຍຫາຍທາງດ້ານກົນຈັກ, ໄຟຟ້າ, ອຸປະກອນ ຫຼື ລະບົບ ຄອມພິວເຕີ ຂອງ ລົດ; ຍົກເວັ້ນກໍລະນີທີ່ເກີດຈາກອຸປະຕິເຫດ.

8.21 ຄວາມເສຍຫາຍທີ່ເກີດຈາກ ນໍ້າ, ຂອງແຫຼວ, ຊາຍ, ລົດຈົມນໍ້າ ເນື່ອງຈາກ ຜູ້ໄດ້ຮັບການປະກັນໄພ ຈົງໃຈ ຂັບຂີ່ລົດຜ່ານເສັ້ນທາງວິບາກ ຫຼື ຂັບຂີ່ຜ່ານແມ່ນໍ້າ ຫຼື ທາງລັດ ຫຼື ເສັ້ນທາງທີ່ມີນໍ້າຖ້ວມ.

8.22 ຄວາມເສຍຫາຍທີ່ເກີດຈາກການປ່ຽນແປງອຸນຫະພູມຢ່າງກະທັນຫັນ ອັນເປັນຜົນມາຈາກ ຄວາມບໍ່ ລະມັດລະວັງ ຫຼື ການເມີນເສີຍ ຂອງ ຜູ້ຂັບຂີ່ ແມ່ນບໍ່ໄດ້ຮັບການຄຸ້ມກັນ ຍົກເວັ້ນໃນກໍລະນີທີ່ເກີດຈາກອຸປະຕິເຫດ.

8.23 ຄ່າໃຊ້ຈ່າຍ ທີ່ເກີດຈາກ ການທຳຄວາມສະອາດ, ການຂ້າເຊື້ອ, ການຟື້ນຟູ, ການສ້ອມແປງ, ການຂັດຖູລົດ ໃຫ້ເງົາງາມ.

8.24 ໃນກໍລະນີທີ່ເກີດອຸປະຕິເຫດ ຖ້າຫາກວ່າຜູ້ໄດ້ຮັບການປະກັນໄພ ບໍ່ແຈ້ງອຸປະຕິເຫດຢ່າງຕົງຕໍ່ເວລາທີ່ໄດ້ ກຳນົດ ຫຼື ການລວມເອົາຄ່າເສຍຫາຍຫຼາຍໆຢ່າງ ເພື່ອແຈ້ງບາດດຽວ, ບໍລິສັດປະກັນໄພ ຈະຮັບຜິດຊອບແຕ່ ຄວາມ ເສຍຫາຍໃໝ່ທີ່ເກີດຂຶ້ນເທົ່ານັ້ນ.

8.25 ໃນກໍລະນີມີການຂີ້ລັກງັດແງະ (ການລັກແມ່ນການກະທຳທີ່ຜິດກົດໝາຍ ເຊິ່ງການກະທຳດັ່ງກ່າວເປັນການ ເອົາຊັບສິນ ຂອງ ບຸກຄົນອື່ນ ໂດຍ ບໍ່ໄດ້ຮັບອະນຸຍາດຢ່າງສະໝັກໃຈ ຫຼື ເປັນການເອົາມາດ້ວຍການຂົ່ມຂູ່ ຫຼື ໃຊ້ ຄວາມຮຸນແຮງ), ກໍລະນີດັ່ງຕໍ່ໄປນີ້ ຈະບໍ່ໄດ້ຮັບການຄຸ້ມກັນ:

8.25.1 ສິ່ງປະກອບ, ເຄື່ອງມື ຫຼື ອາໄຫຼ່ ທີ່ເກັບຢູ່ພາຍນອກ ພາຫະນະ ເຊັ່ນ: ຢາງສຳຮອງ, ລໍ້ແມັກ, ຝາຄອບກະບະ, ກັນຊົນ ...

8.25.2 ຄວາມສູນເສຍ ທີ່ເກີດຈາກ ການປະກຸມແຈລົດໄວ້ ພາຍໃນ ຫຼື ໃນບໍລິເວນໂຕລົດ ໂດຍທີ່ບໍ່ມີຄົນເຝົ້າ ຫຼື ຄົນຢູ່ລົດ;

- ➢ການລັກຊັບທີ່ເກີດຈາກ ສະມາຊິກໃນຄອບຄົວ ຂອງ ຜູ້ໄດ້ຮັບການປະກັນໄພ ທີ່ອາໄສຢູ່ໃນ ຫຼັງຄາ ເຮືອນດຽວ ກັນກັບ ຜູ້ໄດ້ຮັບການປະກັນໄພ ຫຼື ທີ່ເກີດຈາກ ສະມາຊິກໃນຄອບຄົວທີ່ມີສ່ວນພົວພັນກັນ.
- ➢ຄວາມເສຍຫາຍ ຫຼື ການລັກຊັບ ທີ່ເກີດຈາກ ການງັດແງະ ຫຼື ການຍັກຍອກ ໂດຍບຸກຄົນໃດໜຶ່ງ ທີ່ໄດ້ ຮັບມອບໝາຍໃຫ້ ນຳໃຊ້ ຫຼື ຄອບຄອງ ພາຫະນະ ຕາມ ສັນຍາເຊົ່າ, ສັນຍາເຊົ່າສິນເຊື່ອ, ສັນຍາເຊົ່າຊື້, ສັນຍາຊວດຈຳ; ຫຼື ໂດຍບຸກຄົນທີ່ລົງນາມໃນສັນຍາດັ່ງກ່າວ.
- ➢ການລັກຊັບໂດຍ ພະນັກງານ ຂອງ ຜູ້ໄດ້ຮັບການປະກັນໄພ ໃນລະຫວ່າງ ໂມງເຮັດວຽກ ຍົກເວັ້ນໃນ ກໍລະນີທີ່ ມີການຮ້ອງຟ້ອງ ຕໍ່ ພະນັກງານດັ່ງກ່າວໂດຍກົງ.

8.26 ຄວາມເສຍຫາຍ ຈາກ ອຸປະຕິເຫດທີ່ ຜູ້ປະກັນໄພ ພົບເຫັນວ່າ ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ຂັບຂີ່ພາຫະນະ ມີການປົກປິດ, ປອມແປງ, ບໍ່ເປີດເຜີຍຂໍ້ມູນ ຫຼື ເປີດເຜີຍຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ບໍ່ສອດຄ່ອງຕາມຄວາມເປັນຈິງ ກ່ຽວ ກັບ ອຸປະຕິເຫດ (ເຊັ່ນ: ສະຖານທີ່, ເວລາ, ບຸກຄົນທີ່ມີສ່ວນພົວພັນ ແລະ ອື່ນໆ), ປະຕິເສດການໃຫ້ຄວາມຮ່ວມມື ຕໍ່ ເຈົ້າໜ້າທີ່ຕຳຫຼວດ ແລະ/ຫຼື ເຈົ້າໜ້າທີ່ກ່ຽວຂ້ອງ, ຫຼື ລົບໜີ ຈາກສະຖານທີ່ເກີດເຫດ ເພື່ອຫຼີກລ້ຽງ ຄວາມຮັບຜິດຊອບ ຕາມກົດໝາຍ ລວມເຖິງ ການກະທຳທີ່ບໍ່ຈິງໃຈ ທີ່ ຜູ້ປະກັນໄພ ພົບເຫັນ ບໍ່ວ່າກ່ອນ, ໃນລະຫວ່າງ ຫຼື ພາຍຫຼັງທີ່ ຜູ້ ປະກັນໄພໄດ້ຮັບເອົາໜັງສືຮຽກຮ້ອງສິນທົດແທນປະກັນໄພແລ້ວແມ່ນບໍ່ໄດ້ຮັບການຄຸ້ມກັນ.

8.27 ຄວາມເສຍຫາຍທີ່ເກີດຈາກ ການສືບຕໍ່ຂັບຂີ່ລົດປະກັນໄພ ພາຍຫຼັງເກີດອຸປະຕິເຫດ ເຊິ່ງ ຜູ້ໄດ້ຮັບການ ປະກັນໄພ ຄວນຢຸດນຳໃຊ້ລົດ ເພື່ອສ້ອມແປງ ຫຼື ຕິດຕໍ່ ບໍລິສັດປະກັນໄພ ເພື່ອຂໍຄວາມຊ່ວຍເຫຼືອ ຈາກ ພະນັກງານ ປະກັນໄພ. ຄວາມເສຍຫາຍ ບາງຄັ້ງ ແມ່ນເກີດຈາກ ການປະລົດປະກັນໄພ ຢູ່ສະຖານທີ່ ທີ່ບໍ່ມີຄວາມປອດໄພ ເຮັດ ໃຫ້ ມີຄວາມເສຍຫາຍ ເພີ່ມຂຶ້ນ ຫຼື ມີຄວາມເສຍຫາຍໃໝ່ເກີດຂຶ້ນ ແມ່ນບໍ່ໄດ້ຮັບການຄຸ້ມກັນ.

8.28 ຄວາມເສຍຫາຍທີ່ເກີດ ຈາກ ການເມີນເສີຍທີ່ບໍ່ສາມາດຍອມຮັບໄດ້ ເຊັ່ນ: ການຂັບຂີ່ລົດສວນເລນ, ການ ຂັບຂີ່ລົດຍ້ອນສອນ, ການຂັບຂີ່ລົດຜ່ານຈຸດທີ່ມີສິ່ງກີດຂວາງ, ທາງລັດ, ທາງທີ່ຢູ່ໃນສະພາບບໍ່ສາມາດຂັບຂີ່ຜ່ານໄດ້ ໂດຍທີ່ ຜູ້ໄດ້ຮັບການ ປະກັນໄພ ຫຼື ຜູ້ຂັບຂີ່ ກໍຮັບຮູ້ເຖິງຄວາມສ່ຽງທີ່ຈະເກີດຂຶ້ນແມ່ນບໍ່ໄດ້ຮັບການຄຸ້ມກັນ.

8.29 ຄວາມເສຍຫາຍທາງດ້ານຊັບສິນທີ່ເກີດຈາກການສັ່ນ ຫຼື ນໍ້າໜັກ ຂອງ ລົດ ຫຼື ສິ່ງຂອງທີ່ບັນທຸກ ເຊັ່ນ: ຂົວ ຊົ່ວນໍ້າໜັກ, ຂົວ, ຂົວທາງລົດໄຟ, ຖະໜົນ, ທາງຄົນຍ່າງ ຫຼື ສິ່ງທີ່ຢູ່ກ້ອງສິ່ງດັ່ງກ່າວ.

8.30 ຄວາມເສຍຫາຍໃດໜຶ່ງ ຕໍ່ ສາຍໄຟຕ່າງໆ ເຊັ່ນ: ສາຍໄຟຟ້າ, ສາຍໂທລະສັບ, ສາຍໂທລະພາບ ຫຼື ສິ່ງທີ່ຢູ່ເທິງ ສິ່ງດັ່ງ ກ່າວ ທີ່ເກີດຈາກ ຄວາມສູງ ຂອງ ພາຫະນະ ຫຼື ສິ່ງຂອງທີ່ຂົນສົ່ງ (ມາດຕາ 34, ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 188, ລົງວັນທີ 03 ກໍລະກົດ 2007).

8.31 ຄວາມເສຍຫາຍທີ່ເກີດຂຶ້ນ ຕໍ່ ສິນຄ້າ ແລະ ວັດຖຸສິ່ງຂອງ ທີ່ຂົນສົ່ງໂດຍ ລົດປະກັນໄພ ລວມເຖິງ ຄວາມເສຍຫາຍ ທີ່ເກີດຈາກ ສິນຄ້າ ແລະ/ຫຼື ວັດຖຸສິ່ງຂອງດັ່ງກ່າວເອງ ຕໍ່ ບຸກຄົນ ຫຼື ຊັບສິນ ຂອງ ຜູ້ອື່ນ.

8.32 ຄວາມເສຍຫາຍທີ່ເກີດຈາກ ການນຳໃຊ້ ພາຫະນະທີ່ມີປະກັນໄພ ເຂົ້າໃນວຽກງານກໍ່ສ້າງ ຫຼື ການຜະລິດ.

8.33 ຄວາມເສຍຫາຍທີ່ເກີດຈາກ ການກໍ່ການຮ້າຍ.

8.34 ການສ້ອມແປງເບື້ອງຕົ້ນ ຢູ່ ສະຖານທີ່ເກີດອຸປະຕິເຫດ, ຄ່າໃຊ້ຈ່າຍໃນການລາກ, ອູ່ສ້ອມແປງ, ຄ່າໃຊ້ຈ່າຍໃນການ ເຄື່ອນຍ້າຍ ພາຫະນະ ຫຼື ສິ່ງຂອງທີ່ຂົນສົ່ງ ໄປໄວ້ ອູ່ສ້ອມແປງລົດທີ່ໃກ້ທີ່ສຸດ ເຊິ່ງໃນຄວາມເປັນຈິງແລ້ວຄ່າໃຊ້ຈ່າຍດັ່ງ ກ່າວ ແມ່ນ ຜູ້ໄດ້ຮັບການປະກັນໄພ ເປັນຜູ້ຮັບຜິດຊອບ (ເຖິງຢ່າງໃດກໍ່ຕາມ ໃນກໍລະນີ ມີອຸປະຕິເຫດເກີດຂຶ້ນ, ບໍລິສັດ ປະກັນໄພ ຈະທົດແທນເງິນຄືນ ສຳລັບ ຄ່າໃຊ້ຈ່າຍທີ່ກ່າວມາຂ້າງເທິງ ໃນຈຳນວນ 20% ຂອງ ຄ່າໃຊ້ຈ່າຍໃນການສ້ອມແປງທັງໝົດ ເຊິ່ງສິນທົດແທນປະກັນໄພດັ່ງກ່າວ ແມ່ນລວມຢູ່ໃນ ວົງເງິນຄຸ້ມກັນໂຕລົດປະກັນໄພ.

8.35 ຄວາມຮັບຜິດຊອບໃດໜຶ່ງ ແລະ ຫຼື ການຕົກລົງໃດໆທີ່ບໍ່ໄດ້ຮັບການເຫັນດີຈາກ ຜູ້ປະກັນໄພ ກ່ອນ.

8.36 ຜູ້ໄດ້ຮັບການປະກັນໄພ ແລະ ຜູ້ທີ່ກ່ຽວຂ້ອງໃນສັນຍານີ້ມີພັນທະໃນການສະໜອງຂໍ້ມູນຢ່າງຄົບຖ້ວນແລະຖືກຕ້ອງໃຫ້ກັບ ຜູ້ປະກັນໄພ ແລະ ເຫັນດີໃຫ້ ຜູ້ປະກັນໄພ ເຂົ້າເຖິງ, ເກັບກຳ, ຮຽກເອົາ, ນຳໃຊ້ຂໍ້ມູນຈາກຜູ້ກ່ຽວ ແລະພາກສ່ວນທີ່ກ່ຽວຂ້ອງ.

## ມາດຕາ 9 ການປົກປ້ອງສິດ ແລະ ຮຽກຮ້ອງທົດແທນຄືນ (ໃນກໍລະນີມີການຊື້ເອົາການຄຸ້ມກັນດັ່ງກ່າວນີ້)

ພາຍໃນຂອບເຂດວົງເງິນປະກັນໄພສູງສຸດ ສຳລັບ ຄວາມເສຍຫາຍແຕ່ລະຢ່າງຕາມທີ່ໄດ້ກຳນົດໄວ້ໃນ ເງື່ອນໄຂສະເພາະ, ໃນກໍລະນີທີ່ ຜູ້ໄດ້ຮັບການປະກັນໄພຖືກຮ້ອງຟ້ອງ ໂດຍບຸກຄົນທີສາມ ເພື່ອຮຽກຮ້ອງໃຫ້ໃຊ້ແທນຄວາມເສຍຫາຍ ແລະ/ຫຼື ຄວາມສູນເສຍໃດໜຶ່ງອັນເປັນຜົນມາຈາກອຸປະຕິເຫດ, ບໍລິສັດປະກັນໄພ ຈະປົກປ້ອງສິດ ແລະ/ຫຼື ຜົນປະໂຫຍດຂອງຜູ້ໄດ້ຮັບການປະກັນໄພ. ໃນທາງກົງກັນຂ້າມ, ໃນກໍລະນີທີ່ ຜູ້ໄດ້ຮັບການປະກັນໄພ ຮ້ອງຟ້ອງບຸກຄົນທີສາມ ເພື່ອຮຽກຮ້ອງເອົາຄ່າເສຍຫາຍ ແລະ/ຫຼື ຄ່າສູນເສຍທີ່ເກີດຈາກ ອຸບັດຕິເຫດ,

**ພາລະບົດບາດ ແລະ ໜ້າທີ່ ຂອງ ບໍລິສັດປະກັນໄພ:**

- ໃຫ້ຄຳແນະນຳທາງດ້ານເຕັກນິກ,
- ຊ່ວຍໃນການກະກຽມເອກະສານຕ່າງໆ,
- ຊ່ວຍຕິດຕາມຄະດີ ສຳລັບ ຜູ້ໄດ້ຮັບການປະກັນໄພ ເທົ່ານັ້ນ.

**ພາລະບົດບາດ ແລະ ໜ້າທີ່ ຂອງ ຜູ້ໄດ້ຮັບການປະກັນໄພ:**

- ສະໜອງຂໍ້ມູນ ແກ່ ເຈົ້າໜ້າທີ່ຕຳຫຼວດ ດ້ວຍຕົນເອງ;
- ສະໜອງຂໍ້ມູນຫຼັກຖານ ແກ່ ຕຳຫຼວດ / ສານ,
- ໃຫ້ຄຳໃຫ້ການ ຫຼື ຄຳໂຕ້ແຍ້ງ
- ເຂົ້າຮ່ວມການປະຊຸມ ຕາມ ການສະເໜີ,
- ເຂົ້າຮ່ວມຟັງຄຳຕັດສິນ ແລະ ອື່ນໆ...

**ໝາຍເຫດ**: ສຳລັບ ການຄຸ້ມກັນແບບ TPL AB: ບໍລິສັດປະກັນໄພ ບໍ່ມີພັນທະໃນການຈ່າຍເງິນທົດແທນ ສຳລັບ ຄ່າໃຊ້ຈ່າຍທີ່ບໍ່ສາມາດເກັບຄືນໄດ້ທີ່ເກີດຂຶ້ນກັບຜູ້ໄດ້ຮັບການປະກັນໄພ ເຊັ່ນ: ຄວາມສູນເສຍທີ່ເກີດ ຈາກຄວາມລ່າຊ້າ, ຄວາມເສຍຫາຍສືບເນື່ອງ ແລະ ອື່ນໆ. ບໍລິສັດປະກັນໄພ ຈະນຳໃຊ້ຊັບພະຍາກອນທີ່ ບໍລິສັດປະກັນໄພ ມີ ເພື່ອຮ້ອງຟ້ອງ ໃນນາມ ຂອງ ຜູ້ໄດ້ຮັບການປະກັນໄພ ໃນຂະບວນການທາງດ້ານກົດໝາຍ. ຂອບເຂດການບໍລິການ/ການຊ່ວຍເຫຼືອທີ່ ບໍລິສັດປະກັນໄພ ສະໜອງໃຫ້ແມ່ນຈຳກັດສະເພາະ ການກະກຽມເອກະສານທາງດ້ານກົດໝາຍເບື້ອງຕົ້ນເທົ່ານັ້ນ ເນື່ອງຈາກວ່າການດຳເນີນຄະດີ

ໃນຊັ້ນສານອາດຈະຕ້ອງໄດ້ນຳໃຊ້ທະນາຍຄວາມເຂົ້າໃນການວ່າຄວາມ. ຜູ້ໄດ້ຮັບການປະກັນໄພ ຈະຕ້ອງສືບຕໍ່ດຳເນີນຂັ້ນຕອນຕ່າງໆດ້ວຍຕົນເອງ;

ນອກຈາກນັ້ນ, ບໍລິສັດປະກັນໄພ ຍັງສາມາດໃຫ້ຄຳແນະນຳ ກ່ຽວກັບການຊອກຫາທະນາຍຄວາມ ສຳລັບ ວ່າຄວາມໃນຄະດີ ຖ້າຕ້ອງການ.

**ໝາຍເຫດ:** ສຳລັບ ຄະດີທີ່ສາມາດຮຽກຮ້ອງຄ່າເສຍຫາຍໄດ້ ເຊິ່ງຈຳເປັນຈະຕ້ອງມີການແຈ້ງໃຫ້ ເຈົ້າໜ້າຕຳຫຼວດບັນທຶກໄວ້ , ຜູ້ໄດ້ຮັບການປະກັນໄພ ມີສິດ ແລະ ໜ້າທີ່ ຢ່າງເຕັມສ່ວນໃນການແຈ້ງຄວາມດ້ວຍຕົນເອງ ສຳລັບ ຄວາມເສຍຫາຍທີ່ເກີດຂຶ້ນ. ບໍລິສັດປະກັນໄພ ຈະບໍ່ມີສິດ ແລະ ພັນທະພາຍໃຕ້ ກົດໝາຍ ໃນການແຈ້ງຄວາມໃນນາມຂອງບຸກຄົນອື່ນ. ການແຈ້ງຄວາມ ຫຼື ການໃຫ້ການ ກ່ຽວກັບ ລາຍລະອຽດຄວາມເສຍຫາຍ ແມ່ນຖືວ່າເປັນຄະດີອາຍາ. ດັ່ງນັ້ນ, ຜູ້ໄດ້ຮັບການປະກັນໄພ ຕ້ອງແຈ້ງຄວາມກັບເຈົ້າໜ້າທີ່ຕຳຫຼວດດ້ວຍຕົນເອງ. ພາຍຫຼັງທີ່ ເຈົ້າໜ້າທີ່ຕຳຫຼວດ ຮັບແຈ້ງຄວາມຄະດີແລ້ວ, ບໍລິສັດປະກັນໄພ ທີ່ມີຄວາມຮັບຜິດຊອບທາງແພ່ງ ສາມາດຊ່ວຍ ແລະ ຕາງໜ້າຂອງ ຜູ້ໄດ້ຮັບການປະກັນໄພ ເພື່ອຕິດຕາມ ແລະ ລາຍງານຄວາມຄືບໜ້າ ຂອງຄະດີ ໃຫ້ແກ່ ຜູ້ໄດ້ຮັບການປະກັນໄພ ຮັບຊາບເທົ່ານັ້ນ.

## ມາດຕາ 10 ການຄຸ້ມກັນຜູ້ຂັບຂີ່ (ໃນກໍລະນີມີການຊື້ເອົາການຄຸ້ມກັນດັ່ງກ່າວນີ້)

### 1. ຈຸດປະສົງຂອງການຄຸ້ມກັນ

10.1 ຄຸ້ມກັນບຸກຄົນໃດໜຶ່ງທີ່ຂັບຂີ່ ພາຫະນະ ໂດຍໄດ້ຮັບການອະນຸຍາດ ຈາກ ຜູ້ໄດ້ຮັບການປະກັນໄພ ເຊິ່ງເປັນບຸກຄົນທີ່ຈະບໍ່ ໄດ້ຮັບສິນທົດແທນປະກັນໄພ ຈາກ ການປະກັນໄພອື່ນໃດໜຶ່ງ ຫຼື ມີສິດໄດ້ຮັບ ແຕ່ວົງເງິນປະກັນໄພບໍ່ພຽງພໍ. ບໍລິສັດປະກັນໄພຈະຈ່າຍ ເງິນສິນທົດແທນປະກັນໄພ ສຳລັບ ພາກສ່ວນດັ່ງກ່າວທີ່ເກີນວົງເງິນຄຸ້ມກັນເທົ່ານັ້ນ ແລະ ສູງສຸດເຖິງວົງເງິນຄຸ້ມກັນ ພາຍໃຕ້ ສັນຍາປະກັນໄພ.

10.2 ການຄຸ້ມກັນດັ່ງກ່າວ ບໍ່ແມ່ນການຄຸ້ມກັນສະສົມ ລະຫວ່າງ <<ການເສຍຊີວິດ>> ກັບ << ຄວາມພິການ>>.

### 2. ຂໍ້ຍົກເວັ້ນການຄຸ້ມກັນ.

- ຂັບຂີ່ ໃນຂະນະມຶນເມົາ, ບໍ່ວ່າຈະເກີດຈາກລິດຢາເສບຕິດ, ສານເຄມີທີ່ມີລິດຕໍ່ປະສາດ, ການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ທຽບເທົ່າ ຫຼື ເກີນກວ່າ 0.24mg/l ໃນລົມຫາຍໃຈ ຕາມ ກົດໝາຍວ່າດ້ວຍການຈະລາຈອນທາງບົກ ຂອງ ສປປ ລາວ.
- ບຸກຄົນໃດໜຶ່ງ ທີ່ຂັບຂີ່ ພາຫະນະທີ່ມີປະກັນໄພ ໂດຍບໍ່ໄດ້ຮັບອະນຸຍາດ ຈາກ ຜູ້ໄດ້ຮັບການປະກັນໄພ ແລະ ບໍ່ມີໃບອະນຸຍາດ ຂັບຂີ່,
- ຄວາມເສຍຫາຍທີ່ເກີດ ຈາກ ຜູ້ໄດ້ຮັບການປະກັນໄພ ໂດຍເຈດຕະນາ ເປັນຕົ້ນແມ່ນ ອຸປະຕິເຫດ ຫຼື ຄວາມເສຍຫາຍທີ່ ຜູ້ໄດ້ຮັບຜົນປະໂຫຍດ, ຜູ້ຂັບຂີ່ພາຫະນະ, ຜູ້ໂດຍສານ ຫຼື ບຸກຄົນທີສາມ ກໍ່ຂຶ້ນໂດຍເຈດຕະນາ ເພື່ອຈຸດປະສົງໃນການທຳຮ້າຍຮ່າງກາຍຕົນເອງ, ຂ້າຕົວຕາຍ, ພະຍາຍາມຂ້າຕົວຕາຍ; ຫຼື ອາການປ່ວຍທາງຈິດ, ອຸບັດຕິເຫດ, ຄວາມສູນເສຍ ຫຼື ຄວາມເສຍຫາຍອື່ນໆ ທີ່ສ້າງຂຶ້ນໂດຍເຈດຕະນາ ໂດຍ ຜູ້ໄດ້ຮັບການປະກັນໄພ, ຜູ້ຂັບຂີ່ພາຫະນະ ຫຼື ບຸກຄົນອື່ນ ທີ່ດຳເນີນການໃນນາມ ຂອງ ຜູ້ໄດ້ຮັບການປະກັນໄພ ໂດຍມີການມອບໝາຍຢ່າງຈະແຈ້ງ ຫຼື ເປັນໄນງ...
- ການບາດເຈັບທາງດ້ານຮ່າງກາຍ ຫຼື ການເສຍຊີວິດ ຂອງ ຜູ້ຂັບຂີ່ ເຊິ່ງເກີດຈາກ ອຸປະຕິເຫດ ຈາກ ການນຳໃຊ້ພາຫະນະທີ່ມີປະກັນໄພເຂົ້າໃນການຂົນສົ່ງວັດຖຸອັນຕະລາຍ (ວັດຖຸໄວໄຟ, ລະເບີດ, ນ້ຳມັນເຊື້ອໄຟທີ່ເປັນກົດ ແລະ ອື່ນໆ ); ແລະ ຜູ້ຂັບຂີ່ທີ່ໄດ້ຮັບບາດເຈັບ ຈາກ ວັດຖຸອັນຕະລາຍດັ່ງກ່າວ.

## ມາດຕາ 11 ຄ່າປິ່ນປົວ

11.1ຄ່າໃຊ້ຈ່າຍທີ່ໄດ້ຮັບການຄຸ້ມກັນ ຂຶ້ນກັບເອກະສານຫຼັກຖານ

**ຄ່າປິ່ນປົວ** ທີ່ໄດ້ຮັບການຄຸ້ມກັນ ແມ່ນໄດ້ກຳນົດໄວ້ໃນ ເງື່ອນໄຂສະເພາະ ຕາມ ຄ່າໃຊ້ຈ່າຍຕົວຈິງ ແຕ່ບໍ່ເກີນ ວົງເງິນປະກັນໄພ ສຳລັບ ຄ່າຢາ, ຄ່າກວດຮ່າງກາຍ, ການຟື້ນຟູກະດູກ ແລະ ສະມັດຕະພາບທາງຮ່າງກາຍ ລວມເຖິງ ທັນຕະກຳ ແລະ ການໃສ່ອະໄວຍະວະທຽມ ທີ່ເກີດຈາກ ອຸປະຕິເຫດທີ່ໄດ້ຮັບການຄຸ້ມກັນ.

11.2ການຈ່າຍສິນທົດແທນປະກັນໄພ

ສິນທົດແທນປະກັນໄພ ທີ່ຈະຈ່າຍໃຫ້ແກ່ ຜູ້ໄດ້ຮັບການປະກັນໄພ ຈະຕ້ອງບໍ່ສູງກວ່າ ຄ່າໃຊ້ຈ່າຍຕົວຈິງທີ່ເກີດຂື້ນ ແລະ ຈະຕ້ອງບໍ່ເກີນ ກວ່າວົງເງິນປະກັນໄພ.

## ພາກທີ III. ພັນທະ ຂອງ ຜູ້ຊື້ປະກັນໄພ ແລະ ຜູ້ໄດ້ຮັບການປະກັນໄພ ໃນການສະໜອງຂໍ້ມູນ ກ່ຽວກັບ ຄວາມສ່ຽງ

### ມາດຕາ 12 ການແຈ້ງຂໍ້ມູນ ຂອງ ຜູ້ຊື້ປະກັນໄພ ພາຍຫຼັງ ແລະ ໃນລະຫວ່າງ ການເຮັດສັນຍາປະກັນໄພ

**ການປະຕິບັດສັນຍາ – ມາດຕະການຕໍ່ຜູ້ລະເມີດ**

**1/. ພາຍຫຼັງມີການເຮັດສັນຍາປະກັນໄພ**

12.1 ສັນຍາຈະຖືກສ້າງຂື້ນ ຕາມ ການແຈ້ງຂໍ້ມູນ ຂອງ ຜູ້ຊື້ປະກັນໄພ ແລະ ການກຳນົດຄ່າທຳນຽມປະກັນໄພ ແມ່ນຂື້ນກັບ ການໃຫ້ຂໍ້ມູນດັ່ງກ່າວ. ດັ່ງນັ້ນ, ຜູ້ຊື້ປະກັນໄພ ຈະມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ໃນການໃຫ້ຂໍ້ມູນຢ່າງຖືກຕ້ອງ ແລະ ເທົ່າທີ່ຕົນຮູ້ ກ່ຽວກັບ ສະຖານະການທັງໝົດ ເຊິ່ງອາດຈະຊ່ວຍ ບໍລິສັດປະກັນໄພ ໃນການປະເມີນຄວາມສ່ຽງຕ່າງໆ ທີ່ຜູ້ກ່ຽວ ຈະຕ້ອງຮັບຜິດຊອບ.

**2/. ໃນ ລະຫວ່າງ ການປະຕິບັດສັນຍາ**

12.2 ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ຈະຕ້ອງແຈ້ງໃຫ້ ບໍລິສັດປະກັນໄພ ຮັບຊາບ ກ່ຽວກັບ ການປ່ຽນແປງທັງໝົດທີ່ ສົ່ງຜົນກະທົບ ຕໍ່ ຄຸນລັກສະນະ ຂອງ ພາຫະນະ ຕາມທີ່ໄດ້ກຳນົດໄວ້ດັ່ງລຸ່ມນີ້:

* ຈຳນວນບ່ອນນັ່ງ

* ຕົວຖັງ

* ການເຊື່ອມຕໍ່ຊາເລັ້ງໃສ່ພາຫະນະສອງລໍ້

* ນ້ຳໜັກທີ່ມີການປ່ຽນແປງເນື່ອງຈາກການເຄື່ອນທີ່ຂອງສິ່ງຂອງທີ່ບັນທຸກ ແລະ ນ້ຳໜັກຄົງທີ່ (ສຳລັບພາຫະນະທາງການຄ້າ)

* ການປັບປ່ຽນໃດໜຶ່ງ ທີ່ເຮັດໃຫ້ ສະມັດຕະພາບ ຂອງ ພາຫະນະ ມີການປ່ຽນແປງ

12.3 ການນຳໃຊ້ພາຫະນະ ລວມທັງໃນກໍລະນີທີ່ມີ ການດັດແປງຊົ່ວຄາວ

12.4 ສຳລັບ ຜູ້ຂັບຂີ່ທົ່ວໄປ, ເພດ, ອາຍຸ, ວັນທີ ຂອງ ໃບອະນຸຍາດຂັບຂີ່

12.5 ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ຈະຕ້ອງແຈ້ງໃຫ້ ບໍລິສັດປະກັນໄພ ຮັບຊາບ ກ່ອນມີການດັດແປງໃດໆເກີດຂື້ນ ຖ້າຫາກການດັດແປງດັ່ງກ່າວ ແມ່ນເປັນການກະທຳຂອງ ຜູ້ກ່ຽວເອງ ແລະ ໃນກໍລະນີທີ່ບໍ່ມີການກະທຳຂອງຜູ້ກ່ຽວ, ຈະຕ້ອງແຈ້ງໃຫ້ ບໍລິສັດປະກັນໄພ ຮັບຊາບ ພາຍໃນ ແປດວັນ ນັບແຕ່ມື້ທີ່ ຜູ້ກ່ຽວ ຫຼື ບຸກຄົນ ຮູ້ວ່າມີການດັດແປງດັ່ງ ກ່າວເປັນຕົ້ນໄປ.

12.6 ໃນກໍລະນີທີ່ ການດັດແປງ ເຮັດໃຫ້ມີການປ່ຽນແປງຢ່າງຫຼວງຫຼາຍ ເຊັ່ນວ່າ: ມີສະພາບໃໝ່ ໃນເວລາທີ່ເຮັດ ສັນຍາປະກັນໄພ, ບໍລິສັດປະກັນໄພ ຈະບໍ່ເຮັດສັນຍາປະກັນໄພ ຫຼື ອາດຈະເຮັດສັນຍາປະກັນໄພ ແຕ່ຈະຕ້ອງມີການເພີ່ມຄ່າທຳນຽມການປະກັນໄພ ຕື່ມອີກເທົ່ານັ້ນ.

ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ຈະມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ແລະ ລະບຽບຂໍ້ບັງຄັບ ໃນການແຈ້ງຂໍ້ມູນຕາມຄວາມເປັນຈິງ ເຊິ່ງ ບໍລິສັດປະກັນໄພ ມີສິດຍົກເລີກສັນຍາ ໂດຍມີແຈ້ງການລ່ວງໜ້າສິບວັນ ຫຼື ສະເໜີຄ່າທຳນຽມປະກັນໄພໃໝ່ ໃນກໍລະນີທີ່ບໍ່ມີການແຈ້ງຂໍ້ມູນຕາມຄວາມເປັນຈິງ. ໃນກໍລະນີທີ່ ຜູ້ຊື້ປະກັນໄພປະຕິເສດ ຄ່າທຳນຽມປະກັນໄພໃນອັດຕາໃໝ່, ບໍລິສັດປະກັນໄພ ມີສິດຍົກເລີກ ສັນຍາປະກັນໄພ ໂດຍມີແຈ້ງການລ່ວງໜ້າສິບວັນ.

### 3/. ມາດຕະການຕໍ່ຜູ້ລະເມີດ

12.7 ການປົກປິດ, ການແຈ້ງຂໍ້ມູນເທັດໂດຍເຈດຕະນາ, ການເມີນເສີຍ ຫຼື ການແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງ ກ່ຽວກັບ ສະຖານະການ ຫຼື ເຫດການທີ່ໄດ້ກຳນົດໄວ້ຂ້າງເທິງ ຈະຖືກປະຕິບັດມາດຕະການຕ່າງໆດັ່ງຕໍ່ໄປນີ້ ເຖິງແມ່ນວ່າການກະທຳດັ່ງກ່າວ ຈະບໍ່ມີຜົນກະທົບໃດໆຕໍ່ອຸປະຕິເຫດກໍ່ຕາມ:

12.8 ການຍົກເລີກສັນຍາ ແລະ ເຮັດໃຫ້ສັນຍາເປັນໂມຄະ ໃນກໍລະນີ ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ມີພຶດຕິກຳທີ່ບໍ່ຊື່ສັດ.

12.9 ການຫຼຸດສັດສ່ວນສິນທົດແທນປະກັນໄພລົງຈາກຄ່າທຳນຽມປະກັນໄພທີ່ໄດ້ຊຳລະແລ້ວ ເມື່ອທຽບກັບຄ່າທຳນຽມປະກັນໄພ ທີ່ຈະຕ້ອງຈ່າຍ ໃນກໍລະນີທີ່ການແຈ້ງຂໍ້ມູນ ກ່ຽວກັບ ຄວາມສ່ຽງມີຄວາມຖືກຕ້ອງ ແລະ ສຳເລັດສົມບູນ.

ໃນກໍລະນີທີ່ຂໍ້ກ່າວຫາວ່າ ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ມີຄວາມບໍ່ຊື່ສັດແມ່ນບໍ່ມີເຫດຜົນ, ແລະ ຜູ້ ກ່ຽວໄດ້ແຈ້ງຂໍ້ມູນ ກ່ຽວກັບ ຄວາມສ່ຽງຢ່າງຖືກຕ້ອງ ແລະ ສຳເລັດສົມບູນ.

ອັດຕາພື້ນຖານ ສຳລັບ ການຫຼຸດສິນທົດແທນປະກັນໄພ ແມ່ນ ອັດຕາໃນເວລາທີ່ມີການເຮັດສັນຍາປະກັນໄພ ຫຼື ໃນມື້ທີ່ມີຄວາມສ່ຽງ ເກີດຂຶ້ນ ແລ້ວແຕ່ລະກໍລະນີ.

ໃນກໍລະນີທີ່ບໍ່ສາມາດກຳນົດເຫດການຫຼື ວັນທີ່ມີເຫດການເກີດຂຶ້ນ, ໃນມື້ສຸດທ້າຍກ່ອນມີຄວາມເສຍຫາຍເກີດຂຶ້ນ.

## ມາດຕາ 13 ການຈ່າຍຄ່າທຳນຽມປະກັນໄພ

ຜູ້ໄດ້ຮັບການປະກັນໄພຕ້ອງຈ່າຍຄ່າທຳນຽມປະກັນໄພ ເພື່ອທີ່ຈະໄດ້ຮັບການຄຸ້ມກັນ ຕາມທີ່ໄດ້ກຳນົດໄວ້ໃນ ສັນຍາປະກັນໄພ. ໃນກໍລະນີ ບໍ່ມີການຈ່າຍຄ່າທຳນຽມປະກັນໄພ ພາຍໃນ 30 ວັນ ນັບແຕ່ ມື້ເລີ່ມຄຸ້ມກັນທີ່ກຳນົດໄວ້ໃນສັນຍາປະກັນໄພ ຫຼື ໜັງສືສະຫຼັກຫຼັງເປັນຕົ້ນໄປ, ບໍລິສັດປະກັນໄພ ຂໍສະຫງວນສິດໃນການຍົກເລີກ ສັນຍາປະກັນໄພ ຫຼື ໜັງສືສະຫຼັກຫຼັງ ໂດຍບໍ່ຈຳເປັນຕ້ອງແຈ້ງໃຫ້ ຜູ້ໄດ້ຮັບການປະກັນໄພ ຮັບຊາບລ່ວງໜ້າ ກ່ຽວກັບ ການຍົກເລີກດັ່ງກ່າວ.

## ມາດຕາ 14 ການແກ້ໄຂອຸປະຕິເຫດ

14.1 ການແຈ້ງເຫດ

a) ເມື່ອພາຫະນະທີ່ມີປະກັນໄພເກີດອຸປະຕິເຫດ, ເສຍ, ຖືກປຸ້ນຈີ້ ຫຼື ໄດ້ຮັບຄວາມເສຍຫາຍຈາກ ການປະທ້ວງ, ການຈະລາຈົນ ແລະ ການກໍ່ຄວາມບໍ່ສະຫງົບ, ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ຂັບຂີ່ ຕ້ອງແຈ້ງເຫດທັນທີ ໂດຍການໂທ ຫຼື ແຈ້ງຄວາມກັບເຈົ້າໜ້າທີ່ຕຳຫຼວດ ຫຼື ອົງການຈັດຕັ້ງທ້ອງຖິ່ນທີ່ໃກ້ທີ່ສຸດ; ໂທ: 1456; (021) 222 222 ຫຼື 020 5524 4222.

b) ຜູ້ໄດ້ຮັບການປະກັນໄພ ຕ້ອງແຈ້ງໃຫ້ ບໍລິສັດປະກັນໄພ ຮັບຊາບທັນທີ.

c) ຜູ້ໄດ້ຮັບການປະກັນໄພ ຕ້ອງສົ່ງ ເອກະສານໃດໜຶ່ງທີ່ ຜູ້ໄດ້ຮັບການປະກັນໄພ ໄດ້ຮັບ ໃຫ້ແກ່ ບໍລິສັດປະກັນໄພ, ເຊິ່ງເອກະ ສານດັ່ງກ່າວລວມມີ: ໝາຍຮຽກ, ໝາຍສານ ຫຼື ໜັງສືຮຽກຮ້ອງ.

d) ໃນກໍລະນີເກີດ ອຸປະຕິເຫດ ຢູ່ ປະເທດໄທ

ພາຍໃຕ້ ສັນຍາປະກັນໄພທີ່ຄຸ້ມກັນໂຕລົດປະກັນໄພ, ພາຫະນະທີ່ມີປະກັນໄພ ຈະໄດ້ຮັບການຄຸ້ມກັນເຖິງແມ່ນວ່າຈະເກີດອຸປະຕິເຫດຂຶ້ນຢູ່ ປະເທດໄທກໍ່ຕາມ. ການຄຸ້ມກັນດັ່ງກ່າວ ແມ່ນສະເພາະແຕ່ຄວາມເສຍຫາຍທີ່ເກີດຈາກ ການຕຳ (ກັບວັດຖຸເຄື່ອນທີ່) ຂອງພາຫະນະທີ່ມີປະກັນໄພເທົ່ານັ້ນ (ຄວາມເສຍຫາຍຕໍ່ພາຫະນະທີ່ມີປະກັນໄພ). ເຖິງຢ່າງໃດກໍ່ຕາມ, ກ່ຽວກັບ ການຄຸ້ມກັນບຸກຄົນທີສາມ, ຜູ້ໄດ້ຮັບການປະກັນໄພ ຈະຕ້ອງຊື້ປະກັນໄພຈາກ ບໍລິສັດປະກັນໄພຢູ່ປະເທດໄທ ໃນແຕ່ລະຄັ້ງ ແລະ ທຸກຄັ້ງທີ່ຂ້າມໄປຝັ່ງໄທ. ນີ້ກໍເພື່ອຮັບປະກັນວ່າ ຜູ້ໄດ້ຮັບການປະກັນໄພ ມີສັນຍາປະກັນໄພຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມ (TPL) ຢ່າງຖືກຕ້ອງ ເພື່ອຄຸ້ມກັນຄວາມເສຍຫາຍ ແລະ ຄວາມສູນເສຍຕໍ່ບຸກຄົນອື່ນ/ບຸກຄົນທີສາມ ທີ່ ຜູ້ໄດ້ຮັບການປະກັນໄພ ອາດຈະໄດ້ຮັບຜິດຊອບ ເມື່ອມີອຸປະຕິເຫດເກີດຂຶ້ນ.

ດັ່ງນັ້ນ, ບໍລິສັດປະກັນໄພ ສາມາດຂະຫຍາຍການຄຸ້ມກັນຢູ່ ປະເທດໄທ ສໍາລັບຄວາມເສຍຫາຍ ຈາກການຕໍາຂອງພາຫະນະທີ່ມີປະກັນໄພເທົ່ານັ້ນ. **ສໍາລັບ ຄວາມສູນເສຍ ຫຼື ຄວາມເສຍຫາຍໃດໜຶ່ງຕໍ່ບຸກ ຄົນອື່ນ, ກົດໝາຍບັງຄັບໃຫ້ ຜູ້ໄດ້ຮັບການປະກັນໄພ ຕ້ອງຊື້ສັນຍາປະກັນໄພຄວາມຮັບຜິດຊອບທາງແພ່ງ ຕໍ່ບຸກຄົນທີສາມ ກັບ ບໍລິສັດປະກັນໄພ ຢູ່ ປະເທດໄທ.** ດັ່ງນັ້ນ, ມັນຈຶ່ງເປັນຂໍ້ບັງຄັບໃຫ້ ຜູ້ໄດ້ຮັບການປະກັນໄພ ຕ້ອງຊື້ ສັນຍາປະກັນໄພຄວາມຮັບຜິດຊອບຕໍ່ ບຸກຄົນທີສາມ ທຸກໆຄັ້ງທີ່ຂ້າມໄປຝັ່ງໄທ.

### 1) ຂັ້ນຕອນການສະເໜີຂໍສິນທົດແທນປະກັນໄພ

ເມື່ອມີອຸປະຕິເຫດເກີດຂຶ້ນ ຢູ່ ປະເທດໄທ; ການຄຸ້ມກັນຄວາມສູນເສຍ ຫຼື ຄວາມເສຍຫາຍ ຈະແບ່ງເປັນ 2 ພາກສ່ວນຄື:

(i) **ຄວາມເສຍຫາຍຕໍ່ພາຫະນະທີ່ມີປະກັນໄພ (OD)** ໝາຍເຖິງ ຄວາມເສຍຫາຍທີ່ເກີດຈາກ ການຕໍາ ຂອງພາຫະນະທີ່ ມີປະກັນໄພ ໂດຍທີ່ ບໍລິສັດປະກັນໄພ ຈະຮັບຜິດຊອບ;

(ii) **ຄວາມຮັບຜິດຊອບຕໍ່ບຸກຄົນທີສາມ (TPL)** ໝາຍເຖິງ ຄວາມເສຍຫາຍ ຕໍ່ ບຸກຄົນອື່ນ ທີ່ເກີດຈາກ ຜູ້ໄດ້ຮັບການປະກັນໄພ. ຄວາມຮັບຜິດຊອບດັ່ງກ່າວ ແມ່ນໄດ້ຮັບການຄຸ້ມກັນ ຈາກ ບໍລິສັດປະກັນໄພໄທ ທີ່ຂາຍປະກັນໄພຄຸ້ມກັນ ບຸກຄົນທີສາມ ໃຫ້ແກ່ ຜູ້ໄດ້ຮັບການປະກັນໄພ ໃນຂະນະທີ່ຜູ້ກ່ຽວ ຢູ່ປະເທດໄທ (ຂໍ້ມູນເພີ່ມຕື່ມ ກ່ຽວກັບ ຂອບເຂດການຄຸ້ມກັນ ແມ່ນສາມາດເບິ່ງໄດ້ຢູ່ ສັນຍາປະກັນໄພ ແລະ ເອກະສາຍຄັດຕິດ...).

### 2) ຕາຕະລາງກໍານົດຂັ້ນຕອນໃນການຮຽກຮ້ອງສິນທົດແທນປະກັນໄພ

| ລ/ດ | ຄວາມເສຍຫາຍຕໍ່ພາຫະນະທີ່ມີປະກັນໄພ ທີ່ ບໍລິສັດປະກັນໄພ ຄຸ້ມກັນ | ຄວາມຮັບຜິດຊອບຕໍ່ບຸກຄົນທີສາມ ທີ່ ບໍລິສັດປະກັນໄພໄທ ຄຸ້ມກັນ |
|---|---|---|
| 1 | ການແຈ້ງ:<br>ບໍລິສັດປະກັນໄພ AZL<br>**ສາຍດ່ວນ +856-21-222222**<br>ໂທ : +856-21-215903<br>ແຟັກ +856-21-222713<br>ອີເມວ: claims@AZL-allianz.com<br>ເວັບໄຊ: www.azlaos.com | ການແຈ້ງ:<br>ບໍລິສັດປະກັນໄພໄທ<br>ຂໍແຈ້ງໃຫ້ຊາບວ່າ **ບໍລິສັດປະກັນໄພໄທ** ຈະຕ້ອງເປັນ ບໍລິສັດ ທີ່ຜູ້ໄດ້ຮັບການປະກັນໄພ ຊື້ປະກັນໄພຄຸ້ມກັນ ບຸກຄົນທີສາມ ໃນເວລາທີ່ຂ້າມໄປປະເທດໄທ. |
| 2 | ຜູ້ໄດ້ຮັບການປະກັນໄພ ຈະຕ້ອງປະກອບເອກະສານ ດັ່ງຕໍ່ໄປນີ້ ໃຫ້ແກ່ ບໍລິສັດປະກັນໄພ (ຂໍ້ມູນເອກະສານ ດັ່ງກ່າວແມ່ນໄດ້ມາຈາກສະຖານທີ່ເກີດອຸປະຕິເຫດ ທີ່ ເກີດ ຢູ່ ປະເທດໄທ. ໃຫ້ເບິ່ງຕາຕະລາງດ້ານຂວາມື ສໍາລັບ ຂໍ້ມູນເພີ່ມເຕີມ ⇨):<br>1. **ຮູບຖ່າຍອຸປະຕິເຫດ / ຄວາມເສຍຫາຍ** (ປົກກະຕິແລ້ວ, ພະນັກງານປະກັນໄພ ຈະເປັນ ຜູ້ຖ່າຍຮູບ. ເຖິງຢ່າງໃດກໍ່ຕາມ, ບໍລິສັດປະກັນໄພ ແນະນໍາໃຫ້ ຜູ້ໄດ້ຮັບການປະກັນໄພ ຖ່າຍຮູບພາບທີ່ສະແດງ ປ້າຍທະບຽນລົດ, ລາຍລະອຽດ ກ່ຽວກັບ ຄວາມເສຍຫາຍ, ພາກສ່ວນຂອງລົດ ທີ່ຕໍາກັນ ຂອງ ລົດທັງສອງຄັນ ເພື່ອເປັນບ່ອນອີງ)<br>2. **ແບບຟອມຂໍສິນທົດແທນປະກັນໄພ** (ບໍລິສັດປະກັນໄພ ເປັນຜູ້ເອົາໃຫ້ ແລະ ຜູ້ໄດ້ຮັບການປະກັນໄພ ສາມາດຕື່ມຂໍ້ມູນໃສ່ ເວລາທີ່ເກີດອຸປະຕິເຫດ. ຜູ້ໄດ້ຮັບການ | **ພະນັກງານປະກັນໄພ**: ພະນັກງານ/ ຜູ້ສໍາຫຼວດ ຂອງ **ບໍລິສັດປະກັນໄພໄທ** ຈະ:<br>– ລົງພື້ນທີ່ເກີດເຫດ;<br>– ເກັບກໍາຂໍ້ມູນຫຼັກຖານ;<br>– ປະເມີນຄວາມເສຍຫາຍ;<br>– ກໍານົດຄວາມຮັບຜິດຊອບ;<br>– ປະຕິບັດວຽກງານອື່ນໆທີ່ຈໍາເປັນ<br><br>ຢູ່ຂັ້ນນີ້, ພະນັກງານປະກັນໄພ ຈະເຮັດ **ບົດລາຍງານອຸປະຕິເຫດ** ແລະ ໃນກໍລະນີທີ່ ຄູ່ກໍລະນີ ຕົກລົງເຫັນດີ ກັບຂໍ້ກໍານົດ ຂອງ ພະນັກງານປະກັນໄພ, ພະນັກງານປະກັນໄພ ຈະສ້າງ **ສັນຍາການທົດແທນຄວາມເສຍຫາຍ** ຂຶ້ນ.<br><br>**ເຈົ້າໜ້າທີ່ຕໍາຫຼວດ:** ເຈົ້າໜ້າທີ່ຕໍາຫຼວດໄທ ຈະເຂົ້າມາ ແລະ ດໍາເນີນການຕາມຂັ້ນຕອນ ໃນກໍລະນີທີ່ ຄູ່ກໍລະນີ ບໍ່ສາມາດຕົກລົງກັນໄດ້ ພາຍຫຼັງທີ່ ພະນັກງານ ຂອງ ບໍລິສັດປະກັນໄພໄທ ເຂົ້າມາໄກ່ເກ່ຍ ຢູ່ ສະຖານທີ່ເກີດເຫດແລ້ວ (ໂດຍທົ່ວໄປແລ້ວ ແມ່ນກໍລະນີທີ່ມີການບາດເຈັບທາງຮ່າງກາຍຢ່າງຮຸນແຮງ). |

| | | |
|---|---|---|
| | ປະກັນໄພ ຍັງສາມາດນຳໃຊ້ແບບ ຟອມ **ບົດລາຍງານອຸປະຕິເຫດ** ສະບັບສຳເນົາ ຂອງ ບໍລິສັດປະກັນໄພໄທ)<br>3. **ສັນຍາການໃຊ້ແທນຄວາມເສຍຫາຍ** (ຫຼື ສັນຍາ ໃດໜຶ່ງທີ່ສ້າງຂຶ້ນ ເພື່ອກຳນົດຄວາມ ຮັບຜິດຊອບ ຕໍ່ ອຸປະຕິເຫດ ຂອງ ແຕ່ລະ ຝ່າຍ ທີ່ສ້າງ ຂຶ້ນໂດຍ ພະນັກງານ/ຜູ້ສຳ ຫຼວດ ຂອງ ບໍລິສັດ ປະກັນໄພໄທ)<br>4. ຜູ້ໄດ້ຮັບການປະກັນໄພ ຈະຕ້ອງຍື່ນ **ບົດບັນທຶກຂອງເຈົ້າໜ້າທີ່ຕຳຫຼວດ** ເພື່ອຢັ້ງຢືນວ່າ ມີອຸປະຕິເຫດເກີດຂຶ້ນແທ້. | ຈາກນັ້ນ, ເຈົ້າໜ້າທີ່ຕຳຫຼວດ ຈະສອບຖາມ ຄູ່ກໍລະນີ ເພື່ອ ເຈລະຈາ ແລະ ເຮັດ **ບົດບັນທຶກ** ເປັນບ່ອນອີງ ໃນກໍລະນີທີ່ ສາມາດຕົກລົງກັນໄດ້. ຖ້າຫາກບໍ່ສາມາດຕົກລົງກັນໄດ້, ເຈົ້າໜ້າທີ່ ຕຳຫຼວດ ຈະສົ່ງຄະດີດັ່ງກ່າວໃຫ້ຂັ້ນເທິງເປັນຜູ້ ພິຈາລະນາຕັດສິນ.<br><br>ຄະດີດັ່ງກ່າວ ຈະຖືກພິຈາລະນາແກ້ໄຂ ຕາມ ກົດໝາຍ ຈະລາຈອນ ຂອງ ປະເທດໄທ ແລະ ຜູ້ໄດ້ຮັບການປະກັນ ໄພ ຈະໄດ້ ຮັບຄວາມຊ່ວຍເຫຼືອ ຈາກ ບໍລິສັດປະກັນໄພໄທ ໃນການດຳ ເນີນຄະດີໃນແຕ່ລະຂັ້ນ ເຊັ່ນ: ຂັ້ນຕຳຫຼວດ, ຂັ້ນຄະນະກຳມະການຕັດສິນ, ສານ. |
| 3 | ມາຮອດຂັ້ນນີ້ ແມ່ນຈະມີການສ້າງສັນຍາຂຶ້ນ. | |
| 4 | ບໍລິສັດປະກັນໄພ ຈະສ້ອມແປງຄວາມເສຍຫາຍຕໍ່ ພາຫະນະ ທີ່ມີປະກັນໄພ ຕາມ ຂໍ້ກຳນົດ ແລະ ເງື່ອນໄຂ ຂອງ ສັນຍາປະກັນໄພ ແລະ ຈະພິຈາລະນາ ການຊຳລະສິນທົດແທນປະກັນໄພ ຄ່ຽງຄູ່ໄປກັບ ສັນຍາການໃຊ້ແທນຄວາມເສຍຫາຍ ທີ່ ຜູ້ໄດ້ຮັບການ ປະກັນໄພ ເຊັ່ນກັບ ຄູ່ກໍລະນີ ຈາກ ອຸປະຕິເຫດທີ່ເກີດ ຂຶ້ນ ຢູ່ປະເທດໄທ. ບໍລິສັດປະກັນໄພ ຂໍສະ ຫງວນສິດ ໃນການດຳເນີນການແທນ ໃນກໍລະນີທີ່ບຸກຄົນທີສາມ ເປັນຜູ້ກໍ່ໃຫ້ເກີດອຸປະຕິເຫດ ແລະ ຜູ້ໄດ້ຮັບການປະກັນ ໄພ ຈະຕ້ອງໃຫ້ຄວາມຮ່ວມມືຢ່າງເຕັມສ່ວນ ເພື່ອ ອຳນວຍຄວາມ ສະດວກໃຫ້ແກ່ ຂັ້ນຕອນການດຳເນີນ ການແທນດັ່ງກ່າວ. | ໃນກໍລະນີແມ່ນຄວາມຜິດ ຂອງ **ຜູ້ໄດ້ຮັບການປະກັນໄພ** ເອງ ຕໍ່ກັບ ອຸປະຕິເຫດ, ບໍລິສັດປະກັນໄພໄທ ຈະຈ່າຍສິນ ທົດແທນປະກັນໄພ ທີ່ຄຸ້ມກັນຄວາມເສຍຫາຍ ຫຼື ຄວາມສູນ ເສຍ ພາຍໃຕ້ ຄວາມຮັບຜິດຊອບ ຂອງ ຜູ້ໄດ້ຮັບການ ປະກັນໄພ ໃຫ້ແກ່ ບຸກຄົນທີສາມທີ່ມີສ່ວນພົວພັນໃນ ອຸປະຕິເຫດດັ່ງກ່າວ.<br><br>ໃນກໍລະນີແມ່ນຄວາມຜິດ ຂອງ **ຄູ່ກໍລະນີຝ່າຍກົງກັນຂ້າມ**, ບໍລິສັດປະກັນໄພ ຈະດຳເນີນການແທນ ຜູ້ໄດ້ຮັບການ ປະກັນໄພ ແລະ ຈະຕິດຕໍ່ຫາ ບໍລິສັດປະກັນໄພໄທ ເພື່ອຂໍ ຄືນສິນທົດແທນປະກັນໄພທີ່ໄດ້ຊຳລະໄປແລ້ວ. |

## ພາກທີ IV: ຂັ້ນຕອນການຮຽກຮ້ອງສິນທົດແທນປະກັນໄພ

### ມາດຕາ 15 ຄຳແນະນຳ ກ່ຽວກັບ ການປະຕິບັດພາຍຫຼັງເກີດອຸປະຕິເຫດ ແລະ ຂັ້ນຕອນການຈ່າຍສິນທົດແທນປະກັນໄພ

**ນິຍາມຂອງຄຳສັບ:**

1. **ຜູ້ໄດ້ຮັບການປະກັນໄພ**: ໝາຍເຖິງ (1) ບຸກຄົນທີ່ຊື້ປະກັນໄພຈາກ ບໍລິສັດປະກັນໄພ, ຫຼື (2) ບຸກຄົນທີ່ຂັບຂີ່ ພາຫະນະທີ່ມີປະກັນໄພ.
2. **ບຸກຄົນທີສາມ** ຫຼື ເອີ້ນອີກຢ່າງໜຶ່ງວ່າ ຄູ່ກໍລະນີ ຫຼື ຝ່າຍກົງກັນຂ້າມ ໝາຍເຖິງ ບຸກຄົນທີ່ຂັບຂີ່ພາຫະນະ ທີ່ຕຳກັບ ພາຫະນະທີ່ມີປະກັນໄພ ຂອງ ບໍລິສັດປະກັນໄພ ຫຼື (2) ບຸກຄົນທີ່ໄດ້ຮັບຜົນກະທົບ ຈາກ ອຸປະຕິເຫດ ທີ່ເກີດຈາກ ພາຫະນະທີ່ມີ ປະກັນໄພ.
3. **ສິນທົດແທນປະກັນໄພ**: ໝາຍເຖິງ ຈຳນວນຄ່າເສຍຫາຍທີ່ ບໍລິສັດປະກັນໄພ ມີພັນທະຕາມກົດໝາຍ ໃນການຈ່າຍ ໃຫ້ ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດ ຕາມ ຂໍ້ກຳນົດ ແລະ ເງື່ອນໄຂ ຂອງ ສັນຍາປະກັນໄພ.
4. **ໝາຍເຫດ**: ຖ້າໃນກໍລະນີທີ່ ຄູ່ກໍລະນີ ແມ່ນຜູ້ໄດ້ຮັບການປະກັນໄພຂອງ ບໍລິສັດປະກັນໄພ, ຝ່າຍທີ່ເປັນຝ່າຍຜິດ ທີ່ ຈະຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍ ແລະ/ຫຼື ຄວາມສູນເສຍທີ່ເກີດຂຶ້ນຈະຖືກເອີ້ນວ່າ "ຜູ້ໄດ້ຮັບການປະກັນໄພ" (ເນື່ອງຈາກ ບໍລິສັດປະກັນໄພ ຈະໃຊ້ສັນຍາປະກັນໄພບຸກຄົນທີສາມ ເພື່ອຄຸ້ມກັນຄວາມເສຍຫາຍ ແລະ/ຫຼື ຄວາມ ສູນເສຍດັ່ງກ່າວ ໃນນາມຂອງ ຜູ້ໄດ້ຮັບການປະກັນໄພ); ສ່ວນຝ່າຍທີ່ບໍ່ແມ່ນຝ່າຍຜິດຈະຖືກເອີ້ນວ່າ "ບຸກຄົນທີ ສາມ".

## ມາດຕາ 16 ຄຳແນະນຳເບື້ອງຕົ້ນ ກ່ຽວກັບ ການປະຕິບັດພາຍຫຼັງເກີດອຸປະຕິເຫດ

1. ໃຫ້ຕິດຕໍ່ສາຍດ່ວນ ຂອງ ບໍລິສັດປະກັນໄພ AZL: 1456, 021 222 222 (ສາຍດ່ວນ ບໍລິການ 24 ຊົ່ວໂມງ/ 7 ວັນຕໍ່ອາທິດ) ທັນທີ.
2. ບໍ່ແຕະຕ້ອງ ຫຼື ເຄື່ອນຍ້າຍ ພາຫະນະ ເວັ້ນເສຍແຕ່ພາຫະນະດັ່ງກ່າວກີດຂວາງການຈະລາຈອນ; ແຕ່ ກ່ອນຈະເຄື່ອນຍ້າຍຈະຕ້ອງມີການເຮັດເຄື່ອງໝາຍໃສ່ໜ້າທາງ (ລໍ້ລົດ) ໂດຍຈະຕ້ອງໄດ້ຮັບຄວາມຍິນຍອມ ຈາກ ຄູ່ກໍລະນີ ທັງສອງຝ່າຍເສຍກ່ອນ.
3. ຖ້າມີຄົນເຈັບ, ຈະຕ້ອງສົ່ງຜູ້ກ່ຽວ ໄປໂຮງໝໍທີ່ໃກ້ທີ່ສຸດທັນທີ.
4. ໃນກໍລະນີທີ່ ອຸປະຕິເຫດເກີດຂຶ້ນຢູ່ບ່ອນຫ່າງໄກສອກຫຼີກ ເຊິ່ງ ພະນັກງານ ຂອງ ບໍລິສັດປະກັນໄພ ອາດຈະຕ້ອງໃຊ້ ເວລາດົນກວ່າຈະໄປຮອດຈຸດເກີດເຫດ, ຜູ້ໄດ້ຮັບການປະກັນໄພ ຈະຕ້ອງປະຕິບັດຕາມຂັ້ນຕອນດັ່ງນີ້:
   - ແຈ້ງຕຳຫຼວດ ຫຼື ອົງການປົກຄອງທ້ອງຖິ່ນ (ເຊັ່ນ: ນາຍບ້ານ) ເພື່ອມາເປັນພະຍານ ແລະ/ຫຼື ຊ່ວຍກະກຽມເອກະສານຫຼັກຖານ.
   - ຖ່າຍຮູບ (1) ພາຫະນະທີ່ໄດ້ຮັບຄວາມເສຍຫາຍ ແລະ ວັດຖຸໃນສະຖານທີ່ເກີດອຸປະຕິເຫດ ທີ່ສະແດງໃຫ້ເຫັນ ເຖິງພາກສ່ວນຂອງ ລົດທີ່ໄດ້ຮັບຄວາມເສຍຫາຍ; (2) ໃບທະບຽນ ຂອງ ພາຫະນະທີ່ມີປະກັນໄພ; (3) ໃບອະນຸຍາດຂັບຂີ່ພາຫະນະ ຂອງ ຄູ່ກໍລະນີທັງສອງ; (4) ສະຕິກເກີ້ໃບຢັ້ງຢືນປະກັນໄພ (ສະຕິກເກີ້ສີເຫຼືອງທີ່ຕິດຢູ່ກະຈົກໜ້າລົດ); ແລະ (5) ສັນຍາປະກັນໄພ.
   - ໃນກໍລະນີມີການເຈລະຈາຕົກລົງກັນ, ໃຫ້ເຮັດເປັນລາຍລັກອັກສອນ ແລະ ອະທິບາຍເຫດການອຸປະຕິເຫດ ເພື່ອເປັນສິ່ງຢັ້ງຢືນ.
   - ສົ່ງເອກະສານຫຼັກຖານທັງໝົດ ຕາມທີ່ລະບຸໄວ້ຂ້າງເທິງນີ້ໃຫ້ ບໍລິສັດປະກັນໄພ ທັນທີ.

## ມາດຕາ 17 ການຈ່າຍສິນທົດແທນປະກັນໄພ

1. **ການສ້ອມແປງລົດ**

- ກ່ອນຈະນຳເອົາ ພາຫະນະທີ່ໄດ້ຮັບຄວາມເສຍຫາຍໄປສ້ອມແປງ, ເຈົ້າຂອງລົດຈະຕ້ອງແຈ້ງໃຫ້ ບໍລິສັດປະກັນໄພ ຮັບຊາບ ແລະ ອະນຸມັດເສຍກ່ອນ ໂດຍການໂທ: 021 222222 ເພື່ອຫຼີກລ້ຽງບັນຫາທີ່ບໍ່ຄາດຄິດ ທີ່ກ່ຽວຂ້ອງກັບຄຸນນະພາບໃນການສ້ອມແປງ ລວມເຖິງ ບັນຫາການຈ່າຍຄ່າສ້ອມແປງ.
- ບໍລິສັດປະກັນໄພ ຈະບໍ່ຮັບຜິດຊອບ ຕໍ່ ຄວາມເສຍຫາຍ ຫຼື ຄວາມສູນເສຍຕາມມາ ໃນກໍລະນີທີ່ ເອົາລົດໄປສ້ອມແປງ ໂດຍທີ່ບໍ່ແຈ້ງ ຫຼື ບໍ່ໄດ້ຮັບການອະນຸມັດ ຈາກ ບໍລິສັດປະກັນໄພ ລວມເຖິງການສ້ອມແປງລົດຢູ່ອູ່ສ້ອມແປງທີ່ບໍ່ແມ່ນເຄືອຂ່າຍ ຂອງ ບໍລິສັດປະກັນໄພ.
- ພາຍຫຼັງ ສ້ອມແປງລົດສຳເລັດແລ້ວ, ຜູ້ໄດ້ຮັບການປະກັນໄພຈະຕ້ອງຕື່ມແບບຟອມຢັ້ງຢືນ, ສຳລັບ ການຕື່ມແບບຟອມ ພະນັກງານ ຂອງ ບໍລິສັດປະກັນໄພ ຈະແນະນຳເພີ່ມຕື່ມ ໃນກໍລະນີມີເຫດການດັ່ງກ່າວເກີດຂຶ້ນ.






2. **ການຈ່າຍຄ່າປິ່ນປົວ**
   - ການຮັກສາການບາດເຈັບທາງດ້ານຮ່າງກາຍ ຈະຕ້ອງປະຕິບັດຕາມ ຄຳແນະນຳ ຂອງແພດໝໍ ໂດຍມີການວິນິດໄສຢ່າງເປັນທາງການ ແລະ ມີໃບສັ່ງຢາ & ໃບເກັບເງິນອາກອນ ຈາກ ໂຮງໝໍ. ບໍລິສັດປະກັນໄພ ຈະບໍ່ຮັບຜິດຊອບຕໍ່ໃບເກັບເງິນຄ່າປິ່ນປົວ ທີ່ບໍ່ກ່ຽວຂ້ອງກັບ ອຸປະຕິເຫດ.
   - ສົ່ງໃບເກັບເງິນຄ່າປິ່ນປົວໃຫ້ ພະນັກງານ ຂອງ ບໍລິສັດປະກັນໄພ ທີ່ໄປໄກ່ເກ່ຍຢູ່ ສະຖານທີ່ເກີດອຸປະຕິເຫດ. ເອກະສານທັງໝົດຈະຕ້ອງສົ່ງໃຫ້ ບໍລິສັດປະກັນໄພ ສຳນັກງານໃຫຍ່ ເພື່ອກວດສອບ.
   - ບໍລິສັດປະກັນໄພ ຈະຕິດຕໍ່ໃຫ້ ຜູ້ໄດ້ຮັບຜົນປະໂຫຍດມາຮັບເອົາສິນທົດແທນປະກັນໄພພາຍຫຼັງທີ່ ບໍລິສັດປະກັນໄພ ໄດ້ກວດກາເອກະສານທັງໝົດຢ່າງລະອຽດຖີ່ຖ້ວນ ຕາມຂໍ້ກຳນົດ ແລະ ເງື່ອນໄຂ ຂອງສັນຍາປະກັນໄພ.

3. **ການແຕ່ງຕັ້ງຜູ້ຕາງໜ້າເພື່ອສະເໜີຂໍ ຫຼື ຮັບເອົາສິນທົດແທນປະກັນໄພ**

   ໃນກໍລະນີທີ່ ຜູ້ໄດ້ຮັບຜົນປະໂຫຍດ ບໍ່ສາມາດມາຂໍ ແລະ/ຫຼື ຮັບເອົາ ສິນທົດແທນປະກັນໄພ ດ້ວຍຕົນເອງໄດ້, ຜູ້ກ່ຽວ ສາມາດແຕ່ງຕັ້ງ ຜູ້ຕາງໜ້າ ໂດຍການສົ່ງໃບມອບສິດ ລວມເຖິງສຳເນົາບັດປະຈຳຕົວຂອງຜູ້ໄດ້ຮັບຜົນປະໂຫຍດ ແລະ ຜູ້ທີ່ໄດ້ຮັບມອບສິດໃຫ້ແກ່ ບໍລິສັດປະກັນໄພ ເພື່ອຢັ້ງຢືນການມອບສິດດັ່ງກ່າວ.

## ມາດຕາ 18 ຂັ້ນຕອນການອະນຸມັດການຈ່າຍສິນທົດແທນປະກັນໄພ

1) **ຂັ້ນຕອນການອະນຸມັດ**

   ພາຍຫຼັງທີ່ມີການເຈລະຈາ ແລະ ຕົກລົງ ກ່ຽວກັບ ຄວາມຮັບຜິດຊອບຢ່າງຊັດເຈນແລ້ວ, ບໍລິສັດປະກັນໄພ ຈະຈ່າຍສິນທົດແທນປະກັນໄພຕາມຂໍ້ກຳນົດ ແລະ ເງື່ອນໄຂ ຂອງ ສັນຍາປະກັນໄພ ໂດຍປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້:

| | |
|---|---|
| 1 | ການແຈ້ງອຸປະຕິເຫດ |
| 2 | ການເກັບກຳຂໍ້ມູນຫຼັກຖານ |
| 3 | ການນຳເອົາພາຫະນະ ໄປອູ່ສ້ອມແປງລົດ |
| 4 | ການກວດກາ ແລະ ປະເມີນຄວາມເສຍຫາຍ |
| 5 | ການຢັ້ງຢືນຄວາມຖືກຕ້ອງ ແລະ ເຈລະຈາຕໍ່ລອງຄ່າໃຊ້ຈ່າຍໃນການສ້ອມແປງ |
| 6 | ການລາຍງານ ແລະ ຮັບຮອງການຈ່າຍສິນທົດແທນປະກັນໄພ |
| 7 | ການກະກຽມການຈ່າຍສິນທົດແທນປະກັນໄພ |
| 8 | ການຈ່າຍສິນທົດແທນປະກັນໄພ |

2) **ຜູ້ຕິດຕໍ່:**

| | |
|---|---|
| ການແຈ້ງອຸປະຕິເຫດ | 021-222222 (24 ຊົ່ວໂມງ) |
| ການສອບຖາມຂໍ້ມູນທົ່ວໄປ ກ່ຽວກັບ ອຸປະຕິເຫດ | 021-215903 (ຕອນກາງເວັນ) |
| ໜ່ວຍງານປະສານງານອູ່ສ້ອມແປງເຄືອຂ່າຍ | 030-5112652 (7 ໂມງເຊົ້າ –7 ໂມງແລງ) |
| ໜ່ວຍງານຄຸ້ມກັນສິນທົດແທນປະກັນໄພ | 021-215903 ຕໍ່ 175 |
| ໜ່ວຍງານວິຊາການເຕັກນິກ | 021-215903 ຕໍ່ 185 |
| ໜ່ວຍງານນິຕິກຳ | 021-215903 ຕໍ່ 178 |
| ການໃຫ້ຄຳຄິດເຫັນ | 021-215903 ຕໍ່ 166 |

## ມາດຕາ 19 ຂໍ້ຄວນຈື່ທີ່ສຳຄັນ

1.) **ການກຳນົດຄວາມຮັບຜິດຊອບ & ການສະເໜີຂໍສິນທົດແທນປະກັນໄພ**

- ບໍລິສັດປະກັນໄພ AZL ຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍ ຫຼື ຄວາມສູນເສຍໃດໜຶ່ງ ໂດຍປາດສະຈາກ ການຮັບຮອງຢ່າງ ເປັນລາຍລັກອັກສອນ ຈາກ ບໍລິສັດປະກັນໄພ AZL.
- ບໍລິສັດປະກັນໄພ AZL ໄດ້ຄັດຕິດແບບຟອມ "ສັນຍາການໃຊ້ແທນຄ່າເສຍຫາຍ" ກັບ ເອກະສານສະບັບນີ້. ພາຍຫຼັງ ການເຈລະຈາ, ພະນັກງານຂອງ ບໍລິສັດປະກັນໄພ AZL ຈະຕື່ມໃສ່ ແບບຟອມສັນຍາ ດັ່ງກ່າວ ໂດຍກຳນົດຂໍ້ຕົກລົງທັງໝົດທີ່ທັງສອງຝ່າຍຕົກລົງກັນ. ເພື່ອຫຼີກລ້ຽງບັນຫາທີ່ບໍ່ຄາດຄິດໃນອານາຄົດ, ທ່ານຈະຕ້ອງອ່ານລາຍລະອຽດທັງໝົດຢ່າງລະອຽດຖີ່ຖ້ວນ ແລະ ຮັບປະກັນວ່າທ່ານເຂົ້າໃຈ ຂໍ້ກຳນົດ ແລະ ເງື່ອນໄຂ, ພັນທະ ແລະ ຄວາມຮັບຜິດຊອບທັງໝົດແລ້ວ ຈຶ່ງເຊັນສັນຍາດັ່ງກ່າວ.
- ກະລຸນາອ່ານ ຄຳແນະນຳນີ້ ໂດຍລະອຽດເພື່ອໃຫ້ທ່ານມີຄວາມເຂົ້າໃຈຫຼາຍຂຶ້ນ ກ່ຽວກັບ ຂັ້ນຕອນການອະນຸມັດສິນທົດແທນປະກັນໄພຂອງ ບໍລິສັດປະກັນໄພ AZL ແລະ ເພື່ອຄວາມສະດວກໃນການຕິດຕໍ່ ແລະ ຂໍຄວາມຊ່ວຍເຫຼືອ ຈາກ ພະນັກງານທີ່ ກ່ຽວຂ້ອງ ຂອງ ບໍລິສັດປະກັນໄພ AZL.

2.) **ການເປັນໂມຄະ ຂອງ ສັນຍາປະກັນໄພ**

ສັນຍາປະກັນໄພ ຈະເປັນໂມຄະ (ບໍ່ມີຜົນບັງຄັບໃຊ້) ໃນກໍລະນີທີ່ ຜູ້ໄດ້ຮັບການປະກັນໄພ ລະເມີດ ຂໍ້ກຳນົດ ແລະ ເງື່ອນໄຂດັ່ງຕໍ່ໄປນີ້:

- **ຜູ້ໄດ້ຮັບການປະກັນໄພຂັບຂີ່ລົດ ໂດຍບໍ່ມີ ໃບອະນຸຍາດຂັບຂີ່ພາຫະນະ** ສຳລັບ ປະເພດລົດທີ່ຜູ້ກ່ຽວຂັບຂີ່. ເຖິງຢ່າງໃດກໍ່ຕາມ, ສຳລັບ ກໍລະນີທີ່ ຜູ້ໄດ້ຮັບການປະກັນໄພ ລືມໃບອະນຸຍາດຂັບຂີ່ ແຕ່ມີຫຼັກຖານໃຫ້ພະນັກງານຂອງ ບໍລິສັດປະກັນໄພ AZL ເຊື່ອວ່າ ຜູ້ກ່ຽວມີໃບອະນຸຍາດຂັບຂີ່ຢ່າງຖືກຕ້ອງ, ພະນັກງານປະກັນໄພຈະພິຈາລະນາ ແລະ ເຮັດສັນຍາການໃຊ້ແທນຄ່າເສຍຫາຍ ໂດຍກຳນົດວ່າ "ແຕ່ລະຝ່າຍ ຮັບຮູ້ວ່າໃນກໍລະນີທີ່ ຜູ້ໄດ້ຮັບການປະກັນໄພ ບໍ່ສາມາດ ສົ່ງໃບອະນຸຍາດຂັບຂີ່ ສຳລັບ ປະເພດລົດທີ່ ຜູ້ກ່ຽວ ຂັບຂີ່ & ເກີດອຸປະຕິເຫດໃຫ້ແກ່ ບໍລິສັດປະກັນໄພ AZL ໄດ້, ຄວາມຮັບຜິດຊອບຕາມກົດໝາຍທັງໝົດຂອງ ບໍລິສັດປະກັນໄພ AZL ທີ່ໄດ້ກຳນົດ ໄວ້ໃນ ສັນຍາສະບັບນີ້ ຈະຕົກເປັນຄວາມຮັບຜິດຊອບ ຂອງ ຜູ້ໄດ້ຮັບການປະກັນໄພຢ່າງເຕັມສ່ວນ".
- **ຜູ້ໄດ້ຮັບການປະກັນໄພຂັບຂີ່ພາຫະນະໃນເວລາມຶນເມົາ ຈາກການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ຫຼື ລົດຢາ.**
- **ຜູ້ໄດ້ຮັບການປະກັນໄພລົບໜີ ຈາກ ສະຖານທີ່ເກີດອຸປະຕິເຫດ ເພື່ອຫຼີກລ້ຽງຄວາມຮັບຜິດຊອບ**, ມີເຈດຕະນາຊຸກເຊື່ອງ/ທຳລາຍ ຫຼັກຖານໃນການຕາມຕົວຜູ້ກ່ຽວ, ບໍ່ໃຫ້ຄວາມຮ່ວມມື ແກ່ ເຈົ້າໜ້າທີ່ຕຳຫຼວດ ແລະ ມີເຈດຕະນາລະເມີດກົດໝາຍ ແລະ ກົດລະບຽບຈະລາຈອນ ຂອງ ສປປ ລາວ.

3.) **ຄຳແນະນຳເພີ່ມເຕີມ ກ່ຽວກັບ ການຈ່າຍສິນທົດແທນປະກັນໄພ**

ໃນກໍລະນີມີຄວາມຕ້ອງການເງິນສົດ ໂດຍດ່ວນເພື່ອຊຳລະ ຄ່າໃຊ້ຈ່າຍສຸກເສີນໃດໜຶ່ງ ເຊັ່ນ: ຄ່າປິ່ນປົວ ຫຼື ຄ່າສ້ອມແປງລົດ ພາຍຫຼັງເກີດອຸປະຕິເຫດ, ຜູ້ໄດ້ຮັບການປະກັນໄພ ຫຼື ບຸກຄົນທີສາມສາມາດຂໍເບີກເງິນລ່ວງໜ້າ

ແລະ ບໍລິສັດປະກັນໄພ AZL ຈະພິຈາລະນາທົດແທນຄືນໃນພາຍຫຼັງ. ສໍາລັບການເບີກເງິນລ່ວງໜ້າ, ຜູ້ໄດ້ຮັບການປະກັນໄພ ຫຼື ບຸກຄົນທີສາມ ຈະຕ້ອງປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:

- ກະກຽມເອກະສານ ທີ່ ຜູ້ຈ່າຍເງິນ ແລະ ຜູ້ຮັບເງິນ ຈະຕ້ອງເຊັນ.
- ສໍາເນົາບັດປະຈໍາຕົວຂອງທັງສອງຝ່າຍ (ຜູ້ຈ່າຍເງິນ ແລະ ຜູ້ຮັບເງິນ) ໄວ້ເປັນຫຼັກຖານ. ຖ້າຜູ້ຈ່າຍເງິນບໍ່ມີສ່ວນ ກ່ຽວພັນໂດຍກົງກັບອຸປະຕິເຫດ (ບຸກຄົນໃດໜຶ່ງ ຫຼື ຍາດພີ່ນ້ອງຂອງ ແຕ່ລະຝ່າຍ), ໃຫ້ກໍານົດສາຍພົວພັນຢ່າງຊັດເຈນໄວ້ ສໍາເນົາບັດປະຈໍາຕົວ ກ່ອນຈະສົ່ງໃຫ້ ພະນັກງານ ຂອງ ບໍລິສັດປະກັນໄພ AZL.

**ໝາຍເຫດ**: ແບບຟອມການຂໍເບີກເງິນລ່ວງໜ້າຖືກສ້າງຂຶ້ນ ເພື່ອອໍານວຍຄວາມສະດວກໃຫ້ແກ່ ຂັ້ນຕອນການອະນຸມັດການຈ່າຍສິນທົດແທນປະກັນໄພ ເທົ່ານັ້ນ ແລະ ເພື່ອຊໍາລະຄ່າໃຊ້ຈ່າຍສຸກເສີນທີ່ເກີດຂຶ້ນ. ດັ່ງນັ້ນ, ບໍ່ໄດ້ ໝາຍຄວາມວ່າ ບໍລິສັດປະກັນໄພ AZL ຈະພິຈາລະນາທົດແທນເງິນທັງໝົດຕາມທີ່ໄດ້ກໍານົດໄວ້ໃນແບບຟອມດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ, ບໍລິສັດປະກັນໄພ AZL ຈະພິຈາລະນາທົດແທນເງິນຕາມຄວາມເສຍຫາຍຕົວຈິງ ໂດຍອີງຕາມມູນຄ່າຕະຫຼາດຂອງຄວາມເສຍຫາຍ/ອາໄຫຼ່ຂອງພາຫະນະເຊັ່ນດຽວກັນກັບຄ່າໃຊ້ຈ່າຍໃນການປິ່ນປົວຈາກໂຮງໝໍ.

### ມາດຕາ 20 ການສໍ້ໂກງບໍລິສັດປະກັນໄພ

ຖ້າ ຜູ້ໄດ້ຮັບການປະກັນໄພ ມີເຈດຕະນາສໍ້ໂກງ, **ບໍລິສັດປະກັນໄພ** AZL ຈະບໍ່ຈ່າຍສິນທົດແທນປະກັນໄພ ແລະ ຈະຖືວ່າສັນຍາປະກັນໄພ ຖືກຍົກເລີກໂດຍອັດຕະໂນມັດ ໂດຍບໍ່ມີການສົ່ງຄືນຄ່າທໍານຽມປະກັນໄພ ໃຫ້ແກ່ ຜູ້ໄດ້ຮັບການປະກັນໄພ.

### ມາດຕາ 21 ຄວາມຍິນຍອມ ຂອງ ລູກຄ້າ

ໃນປະຈຸບັນ, **ບໍລິສັດ ອາລີອັນສ໌ ປະກັນໄພລາວ ຈໍາກັດ** (AZL) ກໍາລັງດໍາເນີນການປັບປຸງຄວາມເພິ່ງພໍໃຈ ຂອງລູກຄ້າຕໍ່ການພິຈາລະນາການຈ່າຍສິນທົດແທນປະກັນໄພຂອງ ບໍລິສັດພວກເຮົາ. ດັ່ງນັ້ນ, ບໍລິສັດປະກັນໄພ AZL ຈຶ່ງຂໍອະນຸຍາດນໍາໃຊ້ ແລະ ສົ່ງຂໍ້ມູນສ່ວນຕົວຂອງທ່ານ ກ່ຽວກັບ ອຸປະຕິເຫດ ທີ່ພວກເຮົາມີຢູ່ໃນລະບົບ ເຊັ່ນ: ຊື່, ເບີໂທຕິດຕໍ່ ແລະ ທີ່ຢູ່ ໃຫ້ແກ່ຄູ່ຮ່ວມງານຂອງພວກເຮົາ ເພື່ອດໍາເນີນການສໍາຫຼວດຄວາມເພິ່ງພໍໃຈຂອງລູກຄ້າ. ການສໍາຫຼວດແມ່ນຈະດໍາເນີນໃນຮູບແບບເປັນ ແບບສອບຖາມ ທີ່ພວກເຮົາຈະສົ່ງໃຫ້ທ່ານທາງຂໍ້ຄວາມໂທລະສັບມືຖື.

## ພາກທີ V. ຂໍ້ກໍານົດ ກ່ຽວກັບ ສັນຍາ

### ມາດຕາ 22 ການສ້າງ ແລະ ຜົນບັງຄັບໃຊ້ ຂອງ ສັນຍາ

22.1 ໃບສະເໜີປະກັນໄພ ບໍ່ແມ່ນ ສັນຍາຂໍ້ຕົກລົງທີ່ມີຜົນບັງຄັບໃຊ້ ຕໍ່ ບໍລິສັດປະກັນໄພ, ມີພຽງແຕ່ ສັນຍາປະກັນໄພ ແລະ ໜັງສືອະນຸມັດການຄຸ້ມກັນ ຈຶ່ງຈະຖືວ່າເປັນ ສັນຍາປະກັນໄພ.

22.2 ສັນຍາປະກັນໄພ ຈະສໍາເລັດພາຍຫຼັງທີ່ ຄູ່ສັນຍາທັງສອງຝ່າຍ ລົງລາຍເຊັນໃນ ສັນຍາດັ່ງກ່າວ. ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ, ສັນຍາປະກັນໄພ ຈະມີຜົນສັກສິດພາຍຫຼັງມີການຊໍາລະຄ່າທໍານຽມປະກັນໄພ ແລະ ຈະສິ້ນສຸດລົງໃນວັນທີ ທີ່ໄດ້ກໍານົດໄວ້ໃນ ເງື່ອນໄຂສະເພາະ.

22.3 ຂໍ້ກໍານົດດັ່ງກ່າວ ຈະຖືກນໍາໃຊ້ ຕໍ່ ບົດບັນທຶກ ຫຼື ໜັງສືປ່ຽນແປງ ຫຼື ເພີ່ມເຕີມຂໍ້ກໍານົດ ຂອງ ສັນຍາ.

### ມາດຕາ 23 ອາຍຸສັນຍາ

23.1ສັນຍາປະກັນໄພ ຈະສິ້ນສຸດລົງ ຕາມ ກໍານົດເວລາທີ່ໄດ້ລະບຸໄວ້ໃນ ເງື່ອນໄຂສະເພາະ.

## ມາດຕາ 24 ການຍົກເລີກສັນຍາ

24.1 ສັນຍາປະກັນໄພ ຈະຖືກຍົກເລີກ ກ່ອນກຳນົດ ໃນກໍລະນີທີ່ມີເຫດການດັ່ງຕໍ່ໄປນີ້ ເກີດຂື້ນ:

**1. ການຍົກເລີກໂດຍ ຜູ້ຊື້ປະກັນໄພ ຫຼື ບໍລິສັດປະກັນໄພ**

24.2 ໂດຍມີການແຈ້ງລ່ວງໜ້າຢ່າງໜ້ອຍໜຶ່ງເດືອນ ໃນມື້ຄົບຮອບປີ ຂອງ ແຕ່ລະປີ ນັບແຕ່ມື້ທີ່ສັນຍາມີຜົນບັງຄັບໃຊ້:
24.3 ໃນກໍລະນີ ມີການໂອນກຳມະສິດ ຕໍ່ ພາຫະນະທີ່ມີປະກັນໄພ ໃຫ້ແກ່ ຜູ້ອື່ນ;
24.4 ໃນກໍລະນີມີເຫດການໃດໜຶ່ງຕໍ່ໄປນີ້ ເກີດຂື້ນ: ຍ້າຍທີ່ຢູ່, ມີການປ່ຽນແປງສະຖານະພາບທີ່ສຳຄັນ, ການປ່ຽນແປງຂໍ້ຕົກລົງ ກ່ອນແຕ່ງດອງ, ການບຳນານ ໂດຍມີການຍຸຕິການເຮັດວຽກຢ່າງແນ່ນອນ.

**2. ການຍົກເລີກໂດຍ ຜູ້ສືບທອດມູນມໍລະດົກ ຫຼື ບໍລິສັດປະກັນໄພ ຂໍຍົກເລີກສັນຍາ**

**24.5** ໃນກໍລະນີມີການໂອນກຳມະສິດ ຕໍ່ ພາຫະນະທີ່ມີປະກັນໄພ ເນື່ອງຈາກ ການເສຍຊີວິດ.

**3. ການຍົກເລີກໂດຍ ບໍລິສັດປະກັນໄພ**

24.6 ໃນກໍລະນີ ບໍ່ຈ່າຍຄ່າທຳນຽມປະກັນໄພ.
24.7 ໃນກໍລະນີ ມີຄວາມສ່ຽງເພີ່ມຂື້ນ.
24.8 ໃນກໍລະນີ ຜູ້ໄດ້ຮັບການປະກັນໄພ ລະເລີຍ ຫຼື ແຈ້ງຂໍ້ມູນ ກ່ຽວກັບ ຄວາມສ່ຽງຢ່າງບໍ່ຖືກຕ້ອງ ໃນເວລາທີ່ເຮັດສັນຍາປະກັນໄພ ຫຼື ໃນລະຫວ່າງ ການປະຕິບັດສັນຍາປະກັນໄພ.
24.9 ພາຍຫຼັງມີອຸປະຕິເຫດເກີດຂື້ນ, ຜູ້ຊື້ປະກັນໄພ ມີສິດຍົກເລີກ ສັນຍາສະບັບອື່ນທີ່ ຜູ້ຊື້ປະກັນໄພ ເຊັນກັບ ບໍລິສັດປະກັນໄພ.
24.10 ໃນກໍລະນີມີການຊຳລະສະສາງຊັບສິນ ຂອງ ຜູ້ຊື້ປະກັນໄພ ທີ່ລົ້ມລະລາຍ ຕາມ ຄຳສັ່ງສານ.

**4. ການຍົກເລີກໂດຍ ຜູ້ຊື້ປະກັນໄພ**

24.11 ໃນກໍລະນີມີການຫຼຸດການຄຸ້ມກັນກໍລະນີ ທີ່ໄດ້ກຳນົດໄວ້ໃນ ສັນຍາປະກັນໄພ ແຕ່ ບໍລິສັດປະກັນໄພ ບໍ່ຍິນຍອມຫຼຸດຄ່າທຳນຽມປະກັນໄພທີ່ກ່ຽວຂ້ອງ.
24.12 ໃນກໍລະນີທີ່ ບໍລິສັດ ຍຸຕິການດຳເນີນທຸລະກິດ ຫຼື ມີການຍຸບເລີກ.
24.13 ໃນກໍລະນີທີ່ ບໍລິສັດປະກັນໄພມີການຍົກເລີກສັນຍາສະບັບອື່ນຂອງ ຜູ້ຊື້ປະກັນໄພ ພາຍຫຼັງມີອຸປະຕິເຫດເກີດຂື້ນ.
24.14 ໃນກໍລະນີມີການປ່ຽນແປງຄ່າທຳນຽມປະກັນໄພ ຕາມ ຂໍ້ກຳນົດ ຂອງ ມາດຕາ 16 ຂອງ ສັນຍາສະບັບນີ້.

**5. ການຍົກເລີກໂດຍ ເຈົ້າໜີ້ ຂອງ ຜູ້ຊື້ປະກັນໄພ**

24.15 ໃນກໍລະນີມີການຊຳລະສະສາງ ຊັບສິນ ຂອງ ລູກໜີ້ທີ່ລົ້ມລະລາຍ ຕາມ ຄຳສັ່ງສານ.

**6. ການຍົກເລີກຕາມສິດ**

24.16 ໃນກໍລະນີພາຫະນະທີ່ມີປະກັນໄພສູນເສຍ ຫຼື ເສຍຫາຍທັງຄັນອັນເປັນຜົນມາຈາກຄວາມສ່ຽງທີ່ບໍ່ໄດ້ຮັບການຄຸ້ມກັນ
24.17 ໃນກໍລະນີ ມີການໂອນກຳມະສິດ ຕໍ່ ພາຫະນະທີ່ມີປະກັນໄພ ໃຫ້ບຸກຄົນອື່ນ.
24.18 ໃນກໍລະນີ ບໍລິສັດປະກັນໄພ ເພີກຖອນການຄຸ້ມກັນ.

24.19 ໃນກໍລະນີທີ່ ເຈົ້າໜ້າທີ່ລັດ ຮິບເອົາ ພາຫະນະທີ່ມີປະກັນໄພ ຕາມ ລະບຽບກົດໝາຍທີ່ມີຜົນບັງຄັບໃຊ້.

24.20 ໃນກໍລະນີມີການຍົກເລີກສັນຍາ ໃນລະຫວ່າງ ໄລຍະເວລາການຄຸ້ມກັນ, ບໍລິສັດປະກັນໄພ ຈະບໍ່ເກັບຄ່າທໍານຽມປະກັນ ໄພ ສໍາລັບ ໄລຍະເວລາການຄຸ້ມກັນທີ່ຍັງເຫຼືອ. ຖ້າຫາກ ຜູ້ຊື້ປະກັນໄພ ໄດ້ຊໍາລະຄ່າທໍານຽມປະກັນໄພລ່ວງໜ້າ, ບໍລິສັດປະກັນໄພ ຈະສົ່ງເງິນດັ່ງກ່າວຄືນໃຫ້ແກ່ ຜູ້ຊື້ປະກັນໄພ.

24.21 ໃນກໍລະນີທີ່ ຜູ້ຊື້ປະກັນໄພ ຫຼື ຜູ້ສືບທອດມູນມໍລະດົກ ຕັດສິນໃຈຍົກເລີກສັນຍາ ຕາມທີ່ ຜູ້ກ່ຽວ ຄິດວ່າເໝາະສົມ ໂດຍການສົ່ງໜັງສືເປັນລາຍລັກອັກສອນ ຫຼື ໂດຍການແຈ້ງ ຢູ່ ສໍານັກງານໃຫຍ່ ຂອງ ບໍລິສັດປະກັນໄພ ຫຼື ຢູ່ ຫ້ອງການຂອງຄົນກາງປະກັນໄພທີ່ ສັນຍາປະກັນໄພ ຂຶ້ນກັບ, ຫຼື ຍົກເລີກຕາມຄໍາສັ່ງຂອງ ສານ. ຖ້າ ບໍລິສັດປະກັນໄພ ຍົກເລີກສັນຍາ, ບໍລິສັດປະກັນໄພ ຈະຕ້ອງແຈ້ງໃຫ້ ຜູ້ຊື້ປະກັນໄພ ຮັບຊາບ.

24.22 ພາຍໃຕ້ ຂໍ້ກໍານົດການຍົກເລີກສັນຍາ ທີ່ໄດ້ກໍານົດໄວ້.

24.23 ການຍົກເລີກສັນຍາ ໃນມື້ຄົບຮອບປີ ນັບແຕ່ ວັນທີ ທີ່ ສັນຍາປະກັນໄພ ມີຜົນບັງຄັບໃຊ້.

24.24 ການຍົກເລີກສັນຍາ ໃນກໍລະນີ ບໍ່ມີການຊໍາລະຄ່າທໍານຽມປະກັນໄພ.

24.25 ການຍົກເລີກສັນຍາ ໂດຍຜູ້ຊື້ປະກັນໄພ ພາຍຫຼັງ ບໍລິສັດປະກັນໄພ ມີການປ່ຽນແປງອັດຕາຄ່າທໍານຽມປະກັນໄພ,

24.26 ມີຄວາມລ່າຊ້າໃນການສົ່ງແຈ້ງການ ໂດຍທຽບກັບ ມື້ທີ່ສົ່ງແຈ້ງການດັ່ງກ່າວ.

### ມາດຕາ 25 ການໂອນກໍາມະສິດຕໍ່ພາຫະນະທີ່ມີປະກັນໄພ

#### 1. ການເສຍຊີວິດ ຂອງ ຜູ້ຊື້ປະກັນໄພ

25.1ໃນກໍລະນີທີ່ ຜູ້ຊື້ປະກັນໄພ ເສຍຊີວິດ, ປະກັນໄພ ຈະຖືກມອບໂອນຕາມສິດໃຫ້ແກ່ ບຸກຄົນທີ່ສືບທອດມູນມໍລະດົກຕໍ່ພາຫະນະດັ່ງກ່າວ. ໃນກໍລະນີມີການຍົກເລີກສັນຍາປະກັນໄພໂດຍ ຜູ້ສືບທອດມູນມໍລະດົກ, ຜູ້ກ່ຽວ ຈະຕ້ອງຊໍາລະເງິນຊົດເຊີຍການຍົກເລີກສັນຍາທີ່ເທົ່າກັບ ຄ່າທໍານຽມປະກັນໄພ ສໍາລັບ ໄລຍະເວລາການຄຸ້ມກັນທີ່ຍັງເຫຼືອ ໃຫ້ແກ່ ບໍລິສັດປະກັນໄພ.

#### 2. ການໂອນກໍາມະສິດ ຕໍ່ ພາຫະນະທີ່ມີປະກັນໄພ

25.2 ໃນກໍລະນີມີການໂອນກໍາມະສິດ ຕໍ່ ພາຫະນະ, ສັນຍາປະກັນໄພ ຈະຖືກຍົກເລີກ.

25.3 ຜູ້ໄດ້ຮັບການປະກັນໄພ ຈະຕ້ອງແຈ້ງໃຫ້ ບໍລິສັດປະກັນໄພ ຮັບຊາບ ກ່ຽວກັບ ການໂອນ ໂດຍຈະຕ້ອງແຈ້ງເປັນລາຍລັກອັກສອນ ຫຼື ການແຈ້ງໂດຍກົງຕໍ່ ບໍລິສັດປະກັນໄພ.

#### 3. ຂັ້ນຕອນການຍົກເລີກ

ກ. ສິດ ຂອງ ຜູ້ໄດ້ຮັບການປະກັນໄພ

ສໍາລັບການຍົກເລີກສັນຍາປະກັນໄພ, ຜູ້ໄດ້ຮັບການປະກັນໄພຈະຕ້ອງສົ່ງໃບຢັ້ງຢືນປະກັນໄພ ແລະ ສັນຍາປະກັນໄພລົດ ໃຫ້ແກ່ ບໍລິສັດປະກັນໄພ. ຄ່າທໍານຽມປະກັນໄພ ຈະຖືກສົ່ງຄືນຕາມຕາຕະລາງດັ່ງລຸ່ມນີ້ **(ໃນກໍລະນີບໍ່ເຄີຍເກີດອຸປະຕິເຫດເທົ່ານັ້ນ)**:

| ຈໍານວນວັນທີ່ຄຸ້ມກັນ | ≤30 | 31-60 | 61-90 | 91-120 | 121-150 | 151-180 | 181-210 | 211-240 | 241-270 | 271-300 | 301-330 | 331-365 |
|---|---|---|---|---|---|---|---|---|---|---|---|---|
| % ຂອງ ຄ່າທໍານຽມປະຈໍາປີ | 72 | 66 | 60 | 52 | 44 | 32 | 27 | 22 | 15 | 12 | 5 | 0 |

ຂ. ສິດ ຂອງ ບໍລິສັດປະກັນໄພ AZL

ສັນຍາປະກັນໄພລົດທັງໝົດ ຖືກສ້າງຂຶ້ນເພື່ອຄຸ້ມກັນຄວາມສ່ຽງທົ່ວໄປຂອງຜູ້ໄດ້ຮັບການປະກັນໄພ ຢູ່ທ້ອງຖະໜົນ ເຊິ່ງບໍລິສັດປະກັນໄພຮັບຮູ້ດີ ກ່ຽວກັບ ຂອບເຂດຄວາມສ່ຽງ ແລະ ຜູ້ໄດ້ຮັບການປະກັນໄພເອງກໍໄດ້ແຈ້ງຄວາມສ່ຽງທີ່ກ່ຽວຂ້ອງທັງໝົດທີ່ອາດຈະເກີດຂຶ້ນ. ໃນກໍລະນີທີ່ ບໍລິສັດປະກັນໄພ AZL ສືບຮູ້ ກ່ຽວກັບ ຄວາມສ່ຽງອື່ນໆ ພາຍຫຼັງການເຊັນສັນຍາ

ປະກັນໄພ, ບໍລິສັດປະກັນໄພ AZL ຂໍສະຫງວນສິດໃນການພິຈາລະນາວິທີແກ້ໄຂບັນຫາທີ່ແທດເໝາະກັບຄວາມສ່ຽງໃໝ່ດັ່ງກ່າວທີ່ ບໍລິສັດປະກັນໄພ ພົບເຫັນ ຫຼື ມີສິດຍົກເລີກ ສັນຍາປະກັນໄພ ໃນກໍລະນີບໍ່ມີທາງເລືອກອື່ນທີ່ເໝາະສົມ.
ພາຍໃຕ້ ຂໍ້ (ກ) ແລະ (ຂ) ຂ້າງເທິງນີ້, ຜູ້ໄດ້ຮັບການປະກັນໄພ ຕ້ອງສົ່ງ ໃບຢັ້ງຢືນປະກັນໄພ ແລະ ສະຕິກເກີ້ຕົ້ນສະບັບໃຫ້ແກ່ ບໍລິສັດປະກັນໄພ AZL.

## ມາດຕາ 26 ການຄຸ້ມກັນຂໍ້ມູນ

ບໍລິສັດປະກັນໄພ ໄດ້ຮັບ ແລະ ປະເມີນຂໍ້ມູນສ່ວນຕົວຂອງລູກຄ້າ ເພື່ອຈຸດປະສົງໃນການກະກຽມ ໃບສະເໜີລາຄາ, ສັນຍາປະກັນໄພ, ການເກັບຄ່າທຳນຽມປະກັນໄພ, ການຈ່າຍສິນທົດແທນປະກັນໄພ ແລະ ເພື່ອຈຸດປະສົງອື່ນໆທີ່ກ່ຽວຂ້ອງໂດຍກົງກັບ ການຄຸ້ມກັນບໍລິຫານການປະກັນໄພ ຕາມສັນຍາປະກັນໄພ. ການຮັກສາຂໍ້ມູນຂອງ ຜູ້ໄດ້ຮັບການປະກັນໄພ ໄວ້ເປັນຄວາມລັບ ແມ່ນວຽກງານທີ່ເປັນບຸລິມະສິດອັນດັບຕົ້ນໆຂອງ ບໍລິສັດປະກັນໄພ AZL. ຜູ້ໄດ້ຮັບການປະກັນໄພ ມີສິດເຂົ້າເຖິງຂໍ້ມູນສ່ວນຕົວຂອງຕົນໄດ້ ແລະ ມີສິດຂໍໃຫ້ ບໍລິສັດປະກັນໄພ AZL ແກ້ໄຂ ຫຼື ລຶບຂໍ້ມູນໃດໜຶ່ງທີ່ ຜູ້ໄດ້ຮັບການປະກັນໄພເຫັນວ່າ ບໍ່ຖືກຕ້ອງ ຫຼື ເປັນຂໍ້ມູນເກົ່າ. ບໍລິສັດປະກັນໄພ AZL ຈະບໍ່ເກັບຂໍ້ມູນຂອງ ຜູ້ໄດ້ຮັບການປະກັນໄພ ໄວ້ເກີນກວ່າຄວາມຈຳເປັນ ສຳລັບ ຈຸດປະສົງທີ່ກ່າວມາຂ້າງເທິງນັ້ນ.

ເຖິງຢ່າງໃດກໍ່ຕາມ, ບໍລິສັດປະກັນໄພ AZL ມີສິດເປີດເຜີຍຂໍ້ມູນສ່ວນຕົວ ຂອງ ທ່ານ ໃຫ້ແກ່ ພາກສ່ວນອື່ນ ທີ່ມີສ່ວນພົວພັນທາງດ້ານທຸລະກິດ ກັບ ບໍລິສັດປະກັນໄພ AZL ເພື່ອຈຸດປະສົງຕາມທີ່ໄດ້ກຳນົດໄວ້ໃນ ວັກຂ້າງເທິງນີ້ ຫຼື ເພື່ອເຮັດໃຫ້ພາກສ່ວນດັ່ງກ່າວ ສາມາດສະເໜີຜະລິດຕະພັນ ແລະ ການບໍລິການໃຫ້ແກ່ທ່ານ. ພາກສ່ວນດັ່ງກ່າວ ປະກອບດ້ວຍ ບໍລິສັດປະກັນໄພ, ຄົນກາງປະກັນໄພ, ບໍລິສັດປະກັນໄພຕໍ່, ໜ່ວຍງານແນະນຳປະກັນໄພ, ບໍລິສັດໃນເຄືອ, ທີ່ປຶກສາ, ບຸກຄົນທີ່ມີສ່ວນພົວພັນກັບການຮຽກຮ້ອງສິນທົດແທນປະກັນໄພ, ບໍລິສັດພາຍນອກທີ່ເກັບກຳ ແລະ ຢັ້ງຢືນຄວາມຖືກຕ້ອງ ຂອງ ຂໍ້ມູນການຮຽກຮ້ອງສິນທົດແທນປະກັນໄພ, ພາກສ່ວນທີ່ ບໍລິສັດປະກັນໄພ AZL ມີໂຄງການປະກັນໄພ ຮ່ວມນຳ ເຊິ່ງ ທ່ານຊື້ປະກັນໄພ ພາຍໃຕ້ ໂຄງການດັ່ງກ່າວ (ເຊັ່ນ: ຜູ້ສະໜອງທຶນ ຫຼື ຜູ້ຜະລິດ ແລະ/ຫຼື ຜູ້ຂາຍລົດ). ນອກຈາກນັ້ນ, ບໍລິສັດປະກັນໄພ AZL ມີສິດເປີດເຜີຍຂໍ້ມູນ ຕໍ່ ລັດຖະບານ, ເຈົ້າໜ້າທີ່ບັງຄັບກົດໝາຍ, ອົງການແກ້ໄຂຂໍ້ຂັດແຍ່ງ, ອົງການຄຸ້ມກັນ ຫຼື ຕາມກົດໝາຍ.

ບໍລິສັດປະກັນໄພ AZL ຈະບັນທຶກສຽງ ສຳລັບ ສາຍໂທເຂົ້າ ແລະ/ຫຼື ໂທອອກ ເພື່ອຈຸດປະສົງໃນການຝຶກອົບຮົມ ຫຼື ຢັ້ງຢືນຄວາມຖືກຕ້ອງ. ໃນກໍລະນີທີ່ບໍລິສັດບັນທຶກສຽງ, ບໍລິສັດສາມາດສະໜອງສຳເນົາໃຫ້ທ່ານຕາມການສະເໜີຖ້າຫາກມີເຫດຜົນພຽງພໍ.
ໂດຍການສະໜອງຂໍ້ມູນສ່ວນຕົວໃຫ້ ພວກເຮົາ, ທ່ານ ແລະ ບຸກຄົນອື່ນໃດໜຶ່ງ ທີ່ທ່ານສະໜອງຂໍ້ມູນສ່ວນຕົວໃຫ້ ອະນຸຍາດໃຫ້ພວກເຮົານຳໃຊ້ ແລະ ເປີດເຜີຍຂໍ້ມູນດັ່ງກ່າວ ຈົນກວ່າທ່ານຈະແຈ້ງເປັນຢ່າງອື່ນ. ຖ້າທ່ານຕ້ອງການຍົກເລີກການອະນຸຍາດ ລວມເຖິງ ການຍົກເລີກການຮັບຂໍ້ມູນ ກ່ຽວກັບ ຜະລິດຕະພັນ ແລະ ຂໍສະເໜີຕ່າງໆ ຈາກພວກເຮົາ ຫຼື ບໍລິສັດທີ່ພວກເຮົາພົວພັນ ແມ່ນໃຫ້ແຈ້ງພວກເຮົາ.

## ມາດຕາ 27 ອາຍຸຄວາມໃນການຮ້ອງຟ້ອງ

ການຮ້ອງຟ້ອງທັງໝົດທີ່ເນື່ອງມາຈາກ ສັນຍາປະກັນໄພ ໃຫ້ດຳເນີນການພາຍໃນກຳນົດເວລາສາມປີນັບແຕ່ມື້ມີຂໍ້ຂັດແຍ່ງເກີດ ຂຶ້ນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 47 ຂອງ ກົດໝາຍວ່າດ້ວຍປະກັນໄພ.

## ມາດຕາ 28 ສິດອຳນາດຂອງສານ

ສານທີ່ມີສິດອຳນາດໃນການແກ້ໄຂຂໍ້ຂັດແຍ່ງ ລະຫວ່າງ ຜູ້ໄດ້ຮັບການປະກັນໄພ ແລະ ບໍລິສັດປະກັນໄພ ແມ່ນ ສານບ່ອນທີ່ຜູ້ໄດ້ຮັບການປະກັນໄພອາໃສຢູ່.

ສຳລັບ ການປະກັນໄພຄວາມເສຍຫາຍຕໍ່ຊັບສິນ, ສານທີ່ມີສິດອຳນາດ ແມ່ນສານບ່ອນທີ່ ຊັບນັ້ນຕັ້ງຢູ່. ສຳລັບ ການປະກັນໄພອຸປະຕິເຫດ, ສານທີ່ມີສິດອຳນາດ ແມ່ນສານບ່ອນທີ່ມີອຸປະຕິເຫດນັ້ນໄດ້ເກີດຂຶ້ນ.

### ການແກ້ໄຂຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງໃດໜຶ່ງທີ່ເກີດຂຶ້ນພາຍໃຕ້ສັນຍາປະກັນໄພ ຈະໄດ້ຮັບການແກ້ໄຂໂດຍຜູ້ໄດ້ຮັບການປະກັນໄພ ແລະ **ບໍລິສັດປະກັນໄພ** AZL ໂດຍການໄກ່ເກ່ຍ ແລະ ເຈລະຈາຢ່າງສັນຕິວິທີ. ໃນກໍລະນີ ທີ່ບໍ່ສາມາດແກ້ໄຂຂໍ້ຂັດແຍ່ງໄດ້, ທັງສອງຝ່າຍ ມີສິດສະເໜີໃຫ້ ສານທີ່ມີສິດອຳນາດເປັນຜູ້ພິຈາລະນາແກ້ໄຂ. ຖ້າບໍ່ມີການຍື່ນຄຳຮ້ອງຟ້ອງ ຕໍ່ສານພາຍໃນ 12 ເດືອນ ນັບແຕ່ມື້ມີຂໍ້ຂັດແຍ່ງເກີດຂຶ້ນ.

## ພາກທີ VI. ເອກະສານຄັດຕິດ

### ເອກະສານຄັດຕິດ I

**i. ລະດັບຄວາມພິການຖາວອນທັງໝົດ (100%)**

* ການສູນເສຍ ແລະ ການພິການຕາທັງສອງຂ້າງ;
* ການສູນເສຍສະມັດຕະພາບ ຂອງ ອາໄວຍະວະສ່ວນລ່າງ ແລະ ສ່ວນເທິງ;
* ບັນຫາທາງດ້ານສະໝອງທີ່ບໍ່ສາມາດຮັກສາໄດ້ ຊຶ່ງເກີດຂຶ້ນໂດຍກົງຈາກ ອຸປະຕິເຫດທີ່ໄດ້ຮັບການຄຸ້ມກັນເທົ່ານັ້ນ.

**ii. ລະດັບຄວາມພິການຖາວອນບາງສ່ວນ**

| ລາຍລະອຽດຄວາມສູນເສຍ | ຂ້າງຂວາ | ຂ້າງຊ້າຍ |
|---|---|---|
| ການສູນເສຍແຂນ, ມື | 60% | 50% |
| ການສູນເສຍຄວາມສາມາດໃນການເຄື່ອນເໜັງບ່າ | 25% | 20% |
| ການສູນເສຍຄວາມສາມາດໃນການເຄື່ອນເໜັງແຂນສອກ | 20% | 15% |
| ການສູນເສຍຄວາມສາມາດໃນການເຄື່ອນເໜັງຂໍ້ຕໍ່ | 20% | 15% |
| - ນິ້ວໂປ້ມື | 30% | 15% |
| ນິ້ວມືສາມນິ້ວ ລວມເຖິງ ນິ້ວໂປ້ ຫຼື ນິ້ວຊີ້ | 25% | 20% |
| ນິ້ວມືສາມນິ້ວ ທີ່ນອກເໜືອຈາກ ນິ້ວໂປ້ ຫຼື ນິ້ວຊີ້ | 25% | 20% |
| ນິ້ວໂປ້ມື ແລະ ນິ້ວໃດໜຶ່ງ ທີ່ນອກເໜືອຈາກ ນິ້ວຊີ້ | 25% | 20% |
| ນິ້ວຊີ້ ແລະ ນິ້ວໃດໜຶ່ງ ທີ່ນອກເໜືອຈາກ ນິ້ວໂປ້ມື | 20% | 17% |
| ນິ້ວໂປ້ມືນິ້ວດຽວ | 20% | 15% |
| ນິ້ວຊີ້ນິ້ວດຽວ | 15% | 10% |
| ນິ້ວກາງ, ນິ້ວນາງ ຫຼື ນິ້ວກ້ອຍ | 10% | 8% |
| ນິ້ວມືຂ້າງທ້າຍສອງນິ້ວ | 15% | 12% |
| ຂາ ຫຼື ຕີນໜຶ່ງຂ້າງ | 50% | 50% |
| ການຕັດຕີນໜຶ່ງຂ້າງ ລວມເຖິງ ນິ້ວຕີນທຸກນິ້ວ | 30% | |
| ການຕັດຄາງສ່ວນລຸ່ມ | 30% | |
| ການສູນເສຍຕາຂ້າງໜຶ່ງ ຫຼື ການສູນເສຍການເບິ່ງເຫັນເຄິ່ງໜຶ່ງ | 25% | |
| ຫູໜວກທັງສອງຂ້າງ | 40% | |
| ຫູໜວກຂ້າງໜຶ່ງ | 10% | |
| ກະດູກຂາ ຫຼື ຕີນຂ້າງໜຶ່ງແຕກຫັກອອກຈາກກັນ | 25% | |
| ກະດູກຫົວເຂົ່າຂ້າງໜຶ່ງແຕກຫັກອອກຈາກກັນ | 20% | |
| ການສູນເສຍຄວາມສາມາດໃນການເຄື່ອນເໜັງແອວ ຫຼື ຫົວເຂົ່າ | 20% | |
| ການຫຼຸດລົງຢ່າງໜ້ອຍ 5 ຊມ ຂອງ ອະໄວຍະວະທ່ອນລ່າງໜຶ່ງອັນ | 15% | |

| | |
|---|---|
| ການສູນເສຍນິ້ວຕີນໜຶ່ງນິ້ວໃຫຍ່ | 10% |
| ການສູນເສຍນິ້ວຕີນອື່ນໆ | 5% |

ສຳລັບ ຄົນທີ່ຖະນັດແຂນຊ້າຍ, ລະດັບຄວາມພິການ ແມ່ນໃຫ້ນຳໃຊ້ອັດຕາດຽວກັນ ທີ່ໃຊ້ກັບ ຄົນທີ່ຖະນັດແຂນຂວາ.

ສຳລັບຄວາມພິການອື່ນໆທີ່ບໍ່ໄດ້ກຳນົດໄວ້ຂ້າງເທິງ, ເຖິງແມ່ນວ່າ ຈະເປັນອະໄວຍະວະທີ່ສຳຄັນໜ້ອຍກວ່າກໍ່ຕາມ, ບໍລິສັດປະກັນໄພ ຈະຄຸ້ມກັນຕາມສັດສ່ວນທີ່ເໝາະສົມ ແລະ ຕາມລະດັບໂດຍປຽບທຽບກັບກໍລະນີທີ່ໄດ້ກຳນົດໄວ້ຂ້າງເທິງ ໂດຍຈະບໍ່ເອົາອາຊີບຂອງຜູ້ຖືກເຄາະຮ້າຍມາພິຈາລະນາ.

ການສູນເສຍ ຄວາມສາມາດການໃຊ້ງານຂອງອະໄວຍະວະໃດໜຶ່ງທີ່ສຳຄັນ ຈະຖືວ່າ ເປັນການສູນເສຍອະໄວຍະວະດັ່ງກ່າວ.

ຜູ້ໄດ້ຮັບການປະກັນໄພຈະໄດ້ຮັບສິນທົດແທນປະກັນໄພທັງໝົດສຳລັບການສູນເສຍອະໄວຍະວະຫຼາຍອັນທີ່ເກີດຈາກອຸປະຕິເຫດອັນດຽວກັນ ໂດຍການເພີ່ມເຂົ້າໃນວົງເງິນປະກັນໄພ ສຳລັບ ກໍລະນີມີຄວາມພິການຖາວອນທັງໝົດ.

### ເອກະສານຄັດຕິດ II ສ່ວນຫຼຸດຄ່າທຳນຽມ / ມາດຕະການເພີ່ມຄ່າທຳນຽມ

ຂໍ້ກຳນົດນີ້ ຈະຖືກນຳໃຊ້ ໃນທຸກໆມື້ສິ້ນສຸດສັນຍາ ຂອງ ແຕ່ລະປີ, ບໍລິສັດປະກັນໄພ AZL ຈະກຳນົດ ຄ່າທຳນຽມປະກັນໄພທີ່ຜູ້ໄດ້ຮັບການປະກັນໄພ ຈະຕ້ອງຈ່າຍ ຕາມອັດຕາຫຼຸດ ຫຼື ເພີ່ມຄ່າທຳນຽມປະກັນໄພ ໂດຍສອດຄ່ອງກັບ ອັດຕາອ້າງອີງຂອງ ຄວາມສ່ຽງທີ່ໄດ້ຮັບການ ຄຸ້ມກັນ ຕາມທີ່ກຳນົດໃນເງື່ອນໄຂຂອງຂອງຜະລິດພັນປະກັນໄພ.

### ເອກະສານຄັດຕິດ III ຫຼັກການ ກ່ຽວກັບ ຄວາມຮັບຜິດຊອບໂດຍບໍ່ຖືຄວາມຜິດ

ການຈ່າຍສິນທົດແທນປະກັນໄພ ພາຍໃຕ້ ຫຼັກການຄວາມຮັບຜິດຊອບໂດຍບໍ່ຖືຄວາມຜິດ, ຈຳກັດສະເພາະຄວາມເສຍຫາຍທາງດ້ານຮ່າງກາຍ ແລະ ໃນກໍລະນີທີ່ຍັງບໍ່ທັນຮູ້ວ່າໃຜເປັນຜູ້ຮັບຜິດຊອບຄວາມເສຍຫາຍ, ຜູ້ປະກັນໄພຈະຈ່າຍທົດແທນກ່ອນຕາມລະບຽບກົດໝາຍ ສູງສຸດ ຈຳນວນ 10,000,000 ກີບ ຕໍ່ ອຸປະຕິເຫດ 1 ຄັ້ງ ເຊິ່ງໃນນັ້ນ ຕໍ່ຜູ້ເຄາະຮ້າຍ 1 ຄົນ ກໍລະນີເສຍຊີວິດ ຫຼື ພິການຖາວອນທັງໝົດແມ່ນ 3,000,000 ກີບ ແລະ ສຳລັບຄ່າໃຊ້ຈ່າຍໃນການປິ່ນປົວຕາມຄວາມເສຍຫາຍຕົວຈິງ ແຕ່ບໍ່ເກີນ 1,800,000 ກີບ.

| ຂອບເຂດການຄຸ້ມກັນ | ຫຼັກການຄວາມຮັບຜິດຊອບໂດຍບໍ່ຖືຄວາມຜິດ (ເປັນເງິນກີບ) |
|---|---|
| ຄວາມເສຍຫາຍທາງດ້ານຮ່າງກາຍ ສູງສຸດຕໍ່ອຸບັດຕິເຫດໜຶ່ງຄັ້ງ. | 10,000,000 |
| - ການເສຍຊີວິດ ຫຼື ຄວາມພິການຖາວອນທັງໝົດ, ສູງສຸດຕໍ່ຜູ້ຖືກເຄາະຮ້າຍແຕ່ລະຄົນ | 3,000,000 |
| - ຄ່າປິ່ນປົວ, ສູງສຸດຕໍ່ຜູ້ຖືກເຄາະຮ້າຍແຕ່ລະຄົນ | 1,800,000 |
| (ລວມເຖິງ ຄ່າບາລີ ສຳລັບ ກໍລະນີເຂົ້ານອນໂຮງໝໍ ເກີນກວ່າ 24 ຊົ່ວໂມງ) | 100,000 |

### ເອກະສານຄັດຕິດ IV ການເສື່ອມສະພາບ ຂອງ ພາຫະນະທີ່ແລ່ນດ້ວຍເຄື່ອງຈັກ

ນຳໃຊ້ເອກະສານກ່ຽວກັບການຫັກຄ່າຫຼຸ້ຍຫ້ຽນທີ່ກຳນົດໄວ້ສະເພາະຕ່າງຫາກໂດຍພະແນກແກ້ໄຂອຸປະຕິເຫດ